ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
*ການຮ່ວມມື ລາວ-ເຢຍຣະມັນ*

# ຂ່າວໃບລານ

ປີທີ X ສະບັບທີ 21 * ພະຈິກ 2002

## PRESERVATION OF LAO MANUSCRIPTS PROGRAMME

LAO-GERMAN COOPERATION. NEWS BULLETIN • November 2002



*ຫໍໄຕວັດນາທົມ ເມືອງ ອາດສະພອນ ແຂວງ ສະຫວັນນະເຂດ*



# ກອງປະຊຸມທີ່ແຂວງບໍລິຄຳໄຊ

*ສັດຈາກບົດລາຍງານຂອງທ່ານເຄນ ລົມມະນີ*

**ແຂວງ** ບໍລິຄຳໄຊ ເປັນແຂວງໜຶ່ງທີ່ຕັ້ງຢູ່ຈຸດໃຈກາງ ແລະ ເປັນບ່ອນທີ່ກິ່ວທີ່ສຸດຂອງ ສ.ປ.ປ.ລາວ ມີເນື້ອທີ່ທັງໝົດເກືອບ 16.000 ກິໂລແມັດ ທິດເໜືອຕິດກັບແຂວງຊຽງຂວາງ ແລະ ເຂດພິເສດໄຊສົມບູນ ທິດຕາເວັນອອກສ່ຽງເໜືອ ຕິດກັບປະເທດຫວຽດນາມ ທິດຕາເວັນຕົກຕິດກັບແຂວງກຳ ແພງນະຄອນວຽງຈັນ ແລະ ປະເທດໄທ ທິດໃຕ້ຕິດກັບແຂວງຄຳມ່ວນ.

ແຂວງບໍລິຄຳໄຊໃນປະຫວັດສາດ ກ່ອນ ປີ 1975 ແມ່ນແຂວງນ້ອຍໆແຂວງໜຶ່ງໃນຈຳນວນ 13 ແຂວງ ຂອງລະບອບຣາຊອານາຈັກລາວ ມີຊື່ ວ່າແຂວງບໍລິຄັນກົງກັບຊື່ເມືອງ ບໍລິຄັນ ໃນປັດຈຸບັນ ຫລືເມືອງເກົ່າໃນເມື່ອກ່ອນ. ໃນສະໄໝ ເຈົ້າອະນຸສັກ ເປັນເຈົ້າເມືອງບໍລິຄັນໄດ້ຍົກຍ້າຍສຳນັກເມືອງເຂົ້າມາຕັ້ງຢູ່ບໍລິເວນປາກນ້ຳຊັນ ຈຶ່ງໄດ້ປ່ຽນຊື່ມາເປັນເມືອງປາກຊັນ. ແຂວງບໍລິຄັນໃນເວລານັ້ນປະກອບດ້ວຍ 4 ເມືອງ ເມືອງປາກຊັນ, ເມືອງປາກເຈົ້າ (ເມືອງປາກກະດິງປັດຈຸບັນ) ເມືອງເກົ່າ(ເມືອງເກົ່າຂອງເມືອງບໍລິຄັນ ຫລືເມືອງບໍລິຄັນໃນປັດຈຸບັນ) ແລະ ເມືອງພະບາດໂພນສັນ.

ພາຍຫລັງສະຖາປະນາ ສ.ປ.ປ-ລາວ ແລ້ວແຂວງບໍລິຄັນ ໄດ້ປ່ຽນມາເປັນເມືອງໜຶ່ງ ທີ່ຂຶ້ນກັບແຂວງວຽງຈັນຊື່ວ່າເມືອງປາກຊັນ. 1985-86 ຈຶ່ງໄດ້ມີການປ່ຽນແປງການປົກຄອງມາເປັນແຂວງບໍລິຄຳໄຊ ໃນປັດຈຸບັນ ປະກອບດ້ວຍ 6 ເມືອງ : ເມືອງປາກຊັນ, ເມືອງທ່າພະບາດ, ເມືອງບໍລິຄັນ, ເມືອງປາກກະດິງ, ເມືອງຄຳເກີດ, ເມືອງວຽງທອງ ແລະ 1 ເຂດຈຸດສຸມພັດທະນາໃນຕໍ່ໜ້າ ຈະກາຍເປັນເມືອງທີ່ 7 ຂອງແຂວງ. ແຂວງບໍລິຄຳໄຊ ມີປະຊາກອນອາສັຍຢູ່ທັງໝົດ 203.900 ຄົນ ຍິງ 102.000 ຄົນ, 320 ບ້ານ ປະກອບດ້ວຍ 37 ຊົນເຜົ່າ ມີຫລາຍສາດສະໜາ ແຕ່ສ່ວນຫລາຍນັບຖືສາສນາພຸດ. ແຂວງບໍລິຄຳໄຊ ເປັນດິນແດນທີ່ອຸດົມສົມບູນ ດ້ວຍ

ຊຸ້ມໃນດິນສິນໃນນ້ຳ ມີທຳມະຊາດສວຍງາມ ປະຊາຊົນມີອະລິຍະທຳທາງດ້ານຈິດໃຈ,ມີຮີດຄອງປະເພນີວັດທະນະທຳທີ່ດີງາມມາແຕ່ບູຮານະການ, ປະກອບອາຊີບຊາວນາ ແລະ ກະສິກຳ, ມີວິຖີຊີວິດແບບຮຽບງ່າຍ, ຮັບຕ້ອນແຂກດີ ມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ເປັນແຂວງໜຶ່ງທີ່ມີຄວາມຈະເລີນສີວິໄລທາງດ້ານວັດທະນະທຳຂອງ ຊາວເມືອງພວນຈາກແຂວງຊຽງຂວາງທີ່ລົງມາຕາມລຳແມ່ນ້ຳຊັນ ແລະ ແມ່ນ້ຳງຽບ, ອີກສ່ວນໜຶ່ງ ກໍໄດ້ຮັບຄວາມຈະເລີນທາງດ້ານວັດທະນະທຳ ຈາກນະຄອນສີໂຄດຕະບອງໃນເມື່ອກ່ອນ ( ແຂວງ ຄຳມ່ວນໃນປັດຈຸບັນ). ໂດຍສະເພາະ ເມືອງທີ່ມີຊາຍແດນຕິດກັບແຂວງຄຳມ່ວນ ເຊັ່ນ : ເມືອງປາກກະດິງ ທາງຕອນໃຕ້, ເມືອງວຽງທອງ ແລະ ເມືອງຄຳເກີດ ຊຶ່ງໄດ້ຮັບຄວາມສີວິໄລ ດ້ານວັດທະນະທຳ ຈາກນະຄອນຫລວງວຽງຈັນໂດຍກົງ ເພາະວ່າ ແຂວງບໍລິຄຳໄຊເປັນປະຕູເຂົ້າອອກ ແລະ ເປັນຊານເມືອງນະຄອນຫລວງວຽງຈັນ. ສະນັ້ນ ຈຶ່ງປະກອບດ້ວຍວັດທະນະທຳຫລາຍສີສັນ ອຸດົມຮັ່ງມີເປັນມໍລະດົກອັນລ້ຳຄ່າ ດັ່ງມີຄຳຂວັນທີ່ວ່າ : " ແຂວງບໍລິຄຳໄຊ ກິ່ນອາສີຍຂອງຊາວເມື້ຍຜູ້ໄສພາ ກິ່ນໂຕເສົາຫລາໄມ້ເກດສະໜາລາຄາແພງ ທົ່ງນາແຊງກວ້າງໄກ ພະບາດໃຫຍ່ໂພນສັນ ເມືອງຫລັກຊາວງາມສະງ່າ ແຫລ່ງໄຟຟ້ານ້ຳເທີນ ຄືນຊ່າລີ ແລະ ກ່າວເອີ້ນແດນກຸຫລາບປາກຊັນ ".

ໃນວັນທີ 18-20 ມີນາ 2002 ກອງປະຊຸມສຳມະນາວິຊາການສຳຫລວດ ແລະ ປົກປັກຮັກສາໜັງສືຜູກໃບລານ ໄດ້ໄຂຂຶ້ນທີ່ຫ້ອງປະຊຸມວ່າການແຂວງບໍລິຄຳໄຊ ໂດຍແມ່ນພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງຮ່ວມກັບໂຄງການປົກປັກຮັກສາໜັງສືຜູກໃບລານລາວ ( ການຮ່ວມມືລາວ - ເຢຍຣະມັນ ) ເປັນເຈົ້າພາບ. ເປັນກຽດເຂົ້າຮ່ວມຄັ້ງນີ້ມີ ທ່ານ ດຣ ແຂກແກ້ວ ຊຸ້ອຍໄຊຍະ ລັດຖະມຸນຕີຊ່ວຍວ່າການກະຊວງກະແຫລງຂ່າວ ແລະ ວັດທະນະທຳ, ພະນະທ່ານກຣິສຈຽນ ເບີຣ໌ເກີ ເອກອັກຄະລັດຖະທູດ ສ.ສ. ເຢຍຣະມັນ ປະຈຳລາວ, ທ່ານນາງ ບຸນຍົງ ສີສຸວັນນະຄອນ ຄະນະປະຈຳ ພັກແຂວງບໍລິຄຳໄຊ ຫົວໜ້າສຶກສາແຂວງ ທັງຊີ້ນຳວຽກງານກະແຫລງຂ່າວ ແລະ ວັດທະນະທຳ ແລະ ຕາງໜ້າໃຫ້ແກ່ ທ່ານເຈົ້າແຂວງ, ທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ ຫົວໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດ, ທ່ານ ສາດສະດາຈານ ດຣ ດຣ ຮະຣັນ ຮຸນດິອຸສ ຊຽວຊານກິຕິມະສັກປະຈຳໂຄງການປົກປັກຮັກສາໜັງສືຜູກໃບລານລາວ, ທ່ານນາງ ດາຣາ ກັນລະຍາ ທີ່ປຶກສາປະຈຳໂຄງການປົກ ປັກຮັກສາໜັງສືຜູກໃບລານລາວ, ທ່ານນາງ ກົງເດືອນ ເນດຕະວົງ ຫົວໜ້າໂຄງການ ປົກປັກຮັກສາໜັງສືຜູກໃບລານລາວ, ທ່ານ ເຄນ ລໍມະນີ ຫົວໜ້າພະແນກກະແຫລງຂ່າວ ແລະ ວັດທະນະທຳ ແຂວງບໍລິຄຳໄຊ, ພຣະອາຈານ ກຸຫວິນ ປະທານ ອ.ພ.ສ. ແຂວງບໍລິຄຳໄຊ ພ້ອມນີ້ ກໍມີພະສົງ, ສາມະເນນ, ເຖົ້າແກ່ ແນວໂຮມຜູ້ຊົງຄຸນວຸດທິ, ແມ່ຍິງ,ຊາວໜຸ່ມ ແລະ ຫົວໜ້າ ວັດທະນະທຳ ແຕ່ລະເມືອງເຂົ້າຮ່ວມຈຳນວນທັງໝົດ 113 ທ່ານ.

ກອງປະຊຸມດັ່ງກ່າວໄດ້ສະເໜີສະພາບ ແລະຈຳນວນຜູກໜັງສືໃບລານ ໃນແຕ່ລະເມືອງພາຍໃນ ແຂວງ, ປຸກລະດົມ ແລະສ້າງສະຕິຕື່ນຕົວ ຕໍ່ວຽກງານການປົກປັກ ຮັກສາໜັງສືຜູກໃບລານຂອງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຕະຫລອດເຖິງພະສົງສາມະເນນ ແລະ ປະຊາຊົນ. ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໄດ້ແລກປ່ຽນຄຳຄິດຄຳເຫັນຕໍ່ກັນ ເພື່ອການສຶກສາຊອກຫາຄວາມຮູ້ຈາກໜັງສືຜູກໃບລານ

➠

# ເຊີນອ່ານ


| | ໜ້າ |
|---|---|
| ○ ກອງປະຊຸມຢູ່ແຂວງບໍລິຄຳໄຊ.... | 2 |
| ○ ມອບທຶນ.... | 4 |
| ○ ປື້ນສຸດທ້າຍ...... | 5 |
| ○ ການສຶກສາເປັນ...... | 7 |
| ○ ໂຊກດີທີ່ມາ.... | 9 |
| ○ ຄວາມຜູກແຂນ...... | 10 |
| ○ ນະຮາດສາຍຝົນ.... | 11 |
| ○ ປັບຕິດສອນລູກ....... | 12 |
| ○ ພາບຄວາມຊົງຈຳ.... | 13 |
| ○ ໂຕງໂຕຍ.... | 14 |
| ○ ສີບມູນ..... | 15 |
| ○ ການບໍາເພັນປາຣະມີ........ | 17 |
| ○ ພູມໃຈທີ່ມາເຫັນ.... | 19 |

# ມອບທຶນສຶກສາສົງໃຫ້ແຂວງຄຳມ່ວນ

ໂດຍ : ຮັນທະມາລີ



ໃນໄລຍະ 8 ປີທີ່ຜ່ານມາ ຄືນັບແຕ່ 1993 - 2001 ໂຄງການປົກປັກຮັກສາໜັງສືໃບລານ ລາວ - ເຢຍຣະມັນ ໄດ້ ມອບທຶນສຶກສາສົງໃຫ້ແຂວງຫລວງພະບາງ, ຫລວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ອັດຕະປື, ຈຳປາສັກ, ສາລະວັນ, ສະຫວັນນະເຂດ, ສຶກສາສົງສູນກາງ ແລະ ວິທະຍາໄລສົງອົງຕື້ຕາມລຳດັບ.

ອ່ານຕໍ່ໜ້າ 6



ເພື່ອເຜີຍແຜ່ສືບທອດໃຫ້ແກ່ຄົນຮຸ່ນໃໝ່ ໃນວຽກງານການສຳຫລວດ, ທຳຄວາມສະອາດ, ຈັດໝວດໝູ່ ແລະ ປົກປັກຮັກສາໜັງສືຜູກໃບລານ. ໃນມື້ສຸດທ້າຍຂອງກອງປະຊຸມໄດ້ຊົມການຈານໃບລານຂອງ ສາມະເນນຈາກ ສະຖາບັນພຸທສາສະນາ(ວັດອົງຕື້) ທີ່ລົງຝຶກຫັດ ຈາກນັ້ນທ່ານສາດສະດາຈານ ດຣ ດຣ ຣະຣັນ ຣຸນດິອຸສ ຊ່ຽວຊານ ກິຕິມະສັກປະຈຳໂຄງການປົກປັກຮັກສາໜັງສືຜູກໃບລານລາວໄດ້ມອບເງິນ ອຸດໜູນການສຶກສາໃຫ້ແກ່ ອ.ພ.ສ. ແຂວງບໍລິຄຳໄຊ ຈຳນວນ 21 ລ້ານກີບ ເພື່ອນຳໃຊ້ເຂົ້າໃນວຽກ ງານຊຸກຍູ້ການສຶກສາສົງ.

# ບັ້ນສຸດທ້າຍຢູ່ສະຫວັນນະເຂດ

ໂດຍ : ພັນທະວົງ

ທີມງານສຳຫລວດໄດ້ເດີນທາງເຄື່ອນໄຫວປົກປັກຮັກສາໜັງສືຜູກໃບລານໃນ 4 ເມືອງ ຂອງແຂວງສະຫວັນນະເຂດ ແຕ່ວັນທີ 8 ມັງກອນ ເຖິງ 15 ກຸມພາ ຄ.ສ. 2002 ໂດຍການນຳພາຂອງ ທ່ານອາຈານມະຫາບຸນເລີດ ທຳມະຈັກ ( ຫົວໜ້າທີມງານ ).

**1. ເມືອງທ່າພະລານໄຊ** ເປັນເມືອງໜຶ່ງ ທີ່ມີໜັງສືເກົ່າແກ່ ແລະ ສຳຄັນຫລາຍທາງດ້ານພຣະພຸທສາສນາ, ວັດທະນະທັມ ແລະ ຮີດຄອງປະເພນີ ທີ່ນັບຖືກັນມາເປັນເວລາຍາວນານ ການອື້ນບັນຊີໃນເມືອງນີ້ ມີ 3 ວັດ ຄື: ບ້ານບຶງທະເລ, ບ້ານກະຫລອງ ແລະ ບ້ານນາຊາຍເຊິ່ງມີໜັງສືທັງໝົດ **1515** ຜູກ, **233** ເລື່ອງ ແລະ **109** ມັດ : ໃນນັ້ນມີໜັງສືທີ່ເກົ່າແກ່ຄື ເລື່ອງມູລກັຈຈາຍສາຣ ມີອາຍຸເຖິງ **409** ໜັງສືເລື່ອງນີ້ຖືກຄົ້ນພົບຢູ່ໃນ ວັດພົມມະໄຊຍະຣາມ ບ້ານກະຫລອງ ແລະ ມີອາຍຸຮອງລົງມາແມ່ນຢູ່ ວັດສີໄສຄຳບຸນເຮືອງ ບ້ານບຶງທະເລ ເລື່ອງວິໄນຣອມ ເຊິ່ງມີອາຍຸເຖິງ **284**ປີ ທັງສອງເລື່ອງນີ້ໄດ້ພາຍກ່າຍໄມໂຄຣຟິມໄວ້ແລ້ວ.

**2. ເມືອງວິລະບູລີ** ເປັນເມືອງທີ່ຕັ້ງຂຶ້ນໃໝ່ເຊິ່ງແຍກຈາກເມືອງ ເຊໂປນ ມີຊາຍແດນຕິດກັບຫວຽດນາມ ມີຄວາມສວຍງາມທາງທັມມະຊາດ, ມີແຫລ່ງທ່ອງ ທ່ຽວທີ່ສຳຄັນຫລາຍແຫ່ງ ທີ່ມີປະຫວັດສາດອັນຍາວນານພໍສົມຄວນເຊັ່ນ : "**ພະທາດບາງລາວສຸກຈະເລີນ**" ພະທາດນີ້ເປັນສ່ວນໜຶ່ງ ທີ່ພົວພັນກັບກະສັດລ່າວໃນອານາຈັກລ້ານຊ້າງ ມີພະນາມວ່າ**ພະເຈົ້າອະນຸວົງ**. ພະອົງເປັນກະສັດອົງສຸດທ້າຍ ຂອງອານາຈັກລ້ານຊ້າງວຽງຈັນທີ່ມີຄວາມຮັກບ້ານເກີດເມືອງນອນ, ມີນ້ຳໃຈຮັກຊາດ, ຮັກຄວາມເປັນອິດສະລະພາບໃນຜືນແຜ່ນດິນຂອງພະອົງ ກໍ່ຄືປວງຊົນລາວທັງຊາດ, ກ່ອນທີ່ພະອົງຈະສິ້ນພະຊົນລົງ ໃນບັ້ນປາຍຊີວິດກໍ່ໄດ້ສ້າງວິລະກຳອັນລ້ຳຄ່າໄວ້ໃຫ້ອະນຸຊົນຂອງເຮົາທີ່ເກີດໃໝ່ໃຫຍ່ລຸນ ໄດ້ສຶກສາຄົ້ນຄວ້າເຖິງຄວາມບໍ່ເປັນທຳຂອງຄົນບາງກຸ່ມ **ທີ່ໃສ່ຮ້າຍພະອົງວ່າ ເປັນກະສັດ**

➠



ພຣະທາດບາງລາວ ຢູ່ ມ. ວິລະບູລີ ຂ. ສະຫວັນນະເຂດ

ທີ່ຄຶດກະບົດ ບັ້ນໃຫ້ຫາຍຄວາມສົງໄສໂດຍສິ້ນເຊີງ, ບໍ່ໄກຈາກບໍລິເວນທີ່ຕັ້ງຂອງພຣະທາດນີ້ ຍັງມີ ກູ້າພຣະເຈົ້າອົງແສນ, ໜອງປັກກ້ຽວ ແລະ ປັກກອດນີ້ຄືຊື່ຂອງຊ້າງທີ່ຖືກນໍາໃຊ້ເຂົ້າໃນການລາກແກ່ດິນຈີ່ມາສ້າງພຣະທາດນາງລາວສຸກຈະເລີນ ແລະ ໄປທ່ຽວຊົມທິວທັດຄວາມສວຍງາມຂອງເມືອງອ່າງຄໍາ ໃນສະໄໝກ່ອນເມືອງນີ້ເຄີຍມີຄວາມຈະເລີນ ແລະ ມີອານາຈັກທີ່ກວ້າງໄກເປັນກຶ່ນກໍາເນີດຂອງຊາວພູໄທ ເຊິ່ງກວມເອົາເກືອງ 90% ແຕ່ເປັນໜ້າເສຍດາຍໃນອະດີດທີ່ຜ່ານມາເຖິງປັດຈຸບັນ ຄວາມສວຍງາມຂອງເມືອງນີ້ເຫລືອພຽງແຕ່ຊາກ ແລະ ກິ່ນອາຍຂອງລູກລະເບີດທີ່ຍັງຫລົງເຫລືອຢູ່ຕາມບໍລິເວນເສັ້ນທາງໄປມາອັນເປັນຜົນສະທ້ອນຂອງສົງຄາມທໍາລາຍ ທີ່ຈັກກະພັດອະເມຣິກາ ແລະ ພວກລ່າເມືອງຂຶ້ນຝຣັ່ງໄດ້ປະໄວ້ແກ່ພວກເຮົາ. ການລົງສໍາຫລວດໜັງສືຜູກໃບລານຂອງໜ່ວຍງານໃນຄັ້ງນີ້ ຖືວ່າໄດ້ຮັບໝາກ ຜົນພຽງເລັກນ້ອຍເພາະ ວ່າ ວັດວາອາຮາມຕ່າງໆ ສ່ວນຫລາຍຖືກທໍາລາຍລ້າງຈາກໄພສົງຄາມ, ຜົນການສໍາຫລວດໃນເມືອງນີ້ໜ້ອຍກວ່າເມືອງອື່ນໆ ເຊິ່ງສັງລວມໄດ້ 2 ວັດ ຄື : ວັດສີບຸນເຮືອງ ບ້ານທ່າ ແລະ ວັດນໍ້າຈະໂລະ ບ້ານນໍ້າຈະໂລະ ມີທັງໝົດ 715 ຜູກ, 129ເລື່ອງ ແລະ 80 ມັດ.

3. ເມືອງທ່າປາງທອງ ເປັນເມືອງທີ 7 ໃນແຂວງສະຫວັນນະເຂດທີ່ໜ່ວຍງານພວກເຮົາໄປລົງເກັບກໍາຂໍ້ມູນ ແລະ ຂຶ້ນບັນຊີປົກປັກຮັກສາໜັງສືໃບລານ ໃນເມືອງນີ້ ມີທັງໝົດ 5 ວັດ ທີ່ໄດ້ຂຶ້ນບັນຊີ ມີໜັງສືທັງໝົດ1630 ຜູກ, 240 ເລື່ອງ ແລະມີ 155 ມັດ, ມີຈຸດພິເສດແມ່ນເປັນເມືອງທາງໄກຊອກຫລີກຈາກເສັ້ນທາງເລກທີ່ 13 ໃຕ້ມີເຂດແດນຕິດກັບສາລະວັນ ແລະ ເປັນກຶ່ນກໍາເນີດຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວເຮົາ.

4. ເມືອງອາດສະພອນ ກໍ່ເປັນເມືອງໜຶ່ງ ທີ່ທີມງານສໍາຫລວດເຄີຍລົງສໍາຫລວດໄປແລ້ວຄັ້ງໜຶ່ງ ແຕ່ກໍ່ບໍ່ທັນສໍາເລັດເທື່ອ ເນື່ອງຈາກດິນຟ້າອາກາດໃນຍາມຝົນການໄປມາກໍ່ລໍາບາກ ສະນັ້ນ ຈຶ່ງມີການລົງສໍາຫລວດອີກເປັນຄັ້ງທີ່ສອງ ແລະ ກໍ່ສາມາດເກັບກໍາ ແລະ ປົກປັກຮັກສາໄດ້ທັງໝົດ 4 ວັດ ຂຶ້ນບັນຊີໄດ້ 2128 ຜູກ, 345 ເລື່ອງ, 229 ມັດ. ເມືອງ ອາດສະພອນ (ດົງເທັນ) ສົມຄວນແລ້ວທີ່ມີການນໍາຂອງເມືອງກໍ່ຄືວັດທະນະທັມເມືອງໄດ້ເອົາໃຈໃສ່ຕໍ່ການເຄື່ອນໄຫວວຽກສໍາຫລວດ ແລະລົງເກັບກໍາທຸກຊອກທຸກມຸມຂອງເມືອງຈົນສໍາເລັດຕາມຄວາມຄາດໝາຍ. ໃນທີ່ສຸດນີ້ທາງໜ່ວຍງານສໍາຫຼວດຂອງພວກເຮົາຈຶ່ງລວມສະຖິຕິໜັງສືໃບລານໃນ 4 ຕົວເມືອງມີ14 ວັດ ແລະ ມີໜັງສືທັງໝົດ 5.988 ຜູກ, 947 ເລື່ອງ, 573 ມັດ ແລະ ສໍາເລັດສົມບູນໃນທົ່ວແຂວງ ສິ່ງທີ່ສໍາຄັນຍິ່ງໄປກວ່ານີ້ ຂ້າພະເຈົ້າຢາກໃຫ້ຊາວບ້ານ ແລະ ພະສົງພ້ອມດ້ວຍວັດທະນະທັມເມືອງຈົ່ງຊ່ວຍກັນດູແລ, ສອດສ່ອງເບິ່ງໜັງສືເຫລົ່ານີ້ໃຫ້ຢູ່ໃນສະພາບດີກວ່າເດີມ. ຂໍສະແດງຄວາມຂອບໃຈມາຍັງໜ່ວຍງານວັດທະນະທັມເມືອງ ແລະຊາວບ້ານທຸກໆ ບ້ານທີ່ໄດ້ຜ່ານການສໍາຫລວດ ພ້ອມຈິດພ້ອມໃຈຮ່ວມໄມ້ຮ່ວມມືໃນການ ຂຶ້ນບັນຊີເປັນທີ່ຮຽບຮ້ອຍ ແລະ ສໍາເລັດລົງດ້ວຍດີ. ຂໍອວຍໄຊໃຫ້ພອນທຸກທ່ານຈົ່ງປະສົບແຕ່ຄວາມສຸກຄວາມຈະເລີນໃນ ຊີວິດຂອງທ່ານ ແລະ ກ້າວໜ້າໃນວຽກງານຂອງແຕ່ລະຄົນຫວັງວ່າຈະໄດ້ມີໂອກາດລົງພົບປະ ແລະ ຢ້ຽມຢາມອີກເທື່ອໃໝ່ໃນທ້ອງຖິ່ນທີ່ໄດ້ກ່າວມາແລ້ວ.

ຕໍ່ຈາກໜ້າ 4

ມາຮອດວັນທີ່ 21 ກັນຍາ 2001 ໂຄງການປົກປັກຮັກສາໜັງສືໃບລານລາວ - ເຢຍຣະມັນ ໄດ້ສືບຕໍ່ມອບທຶນສຶກສາສົງໃຫ້ແຂວງຄໍາມ່ວນ ຈໍານວນເງິນ 23,300,000 ກີບ.

ໃນພິທີອັນສະງ່າລາສີນີ້ ທ່ານ ສາສດາຈານ ດຣ. ດຣ. ຣະຣັນ ຣຸນດິອຸສ ຕາງໜ້າໃຫ້ ໂຄງການ ໃບລານລາວ - ເຢຍຣະມັນ ເປັນຜູ້ກ່າວມອບ ພະອາຈານ ບົວໄຂ ພັນທະວົງ ປະທານອ.ພ.ສແຂວງຄໍາມ່ວນ ຕາງໜ້າໃຫ້ພະສົງ ສາມເນນ ກໍ່ຄືຊາວພຸດແຂວງຄໍາມ່ວນ ເປັນຜູ້ກ່າວ ຮັບໂດຍຊ້ອງໜ້າ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍ. ພະອາຈານກ່າວວ່າ: "ອາດຕະມາຈະນໍາເອົາເງິນດັ່ງກ່າວ ໃຊ້ເຂົ້າໃນການຮຽນອານຮຽນຂຽນໂຕທັມ ແລະ ຊື້ອຸປະກອນທີ່ຈໍາເປັນເພື່ອໃຫ້ສຶກສາສົງໃນແຂວງຄໍາມ່ວນກ້າວໜ້າໄປຢ່າງບໍ່ຢຸດຢັ້ງ. ອາດຕະມາ ຂໍສະແດງຄວາມຂອບ ອົກຂອບໃຈຢ່າງຈິງໃຈຕໍ່ໂຄງການໃບລານລາວ - ເຢຍຣະມັນ. ຂໍໃຫ້ພວກທ່ານຈົ່ງປະສົບແຕ່ ຄວາມສຸກ ຄວາມຈະເລີນ ມີອາຍຸ, ວັນນະ, ສຸຂະ, ພະລະ ຕະຫລອດການລະນານເທີ້ນ ".

# ການສຶກສາເປັນຂອງທຸກຄົນ

ໂດຍ : ຄຳສິງ ວົງສະຫວ່າງ



*ທ່ານສີວິໄລ ປັນແກ້ວ*
*ຫົວໜ້າ ສ/ສ ແຂວງ ຫລວງນ້ຳທາ ກ່າວເປີດ ຮ/ຮ ສົງ*

**ການ** ສະແຫວງຫາຄວາມຮູ້ແມ່ນພຶດຕິກຳຂອງມວນມະນຸດ ນັບຕັ້ງແຕ່ມື້ເກີດຈົນເຖິງວິນາທີສຸດທ້າຍ ຄວາມຮັບຮູ້ສິ່ງໃຫມ່ໆທີ່ມາກະທົບໃສ່ສະໝອງແລ້ວເກັບກຳໄວ້ເປັນກຳໄລຊີວິດເຮັດໃຫ້ມະນຸດມີຄວາມຄິດເກີດຂຶ້ນພ້ອມກັນ ກ້າວ ໄປຫນ້າຢ່າງບໍ່ຢຸດຢັ້ງ.

ການສຶກສາຂອງຄົນລາວເຮົາແຕ່ບູຮານແມ່ນອາໄສຮຽນຮູ້ຈາກບັນພະບູລຸດໃນທຸກດ້ານ ແຕ່ການສະສົມຄວາມຮູ້ (ພູມປັນຍາ) ນັ້ນເພີ່ນນິຍົມບັນທຶກໃສ່ໃບລານ ແລ້ວມີການສຶກສາຮ່ຳຮຽນຢ່າງເປັນລະບົບຢູ່ວັດ. ສະນັ້ນ ວັດຈຶ່ງແມ່ນສູນກາງຂໍ້ມູນຄວາມຮູ້ບໍ່ສະເພາະແຕ່ເລື່ອງສາສະນາເທົ່ານັ້ນ ນັບທັງວິຊາຊີບອື່ນໆ (ສຳມາອາຊີວະ). ໃຜຢາກມີຄວາມຮູ້ກໍ່ຕ້ອງບວດ, ຮຽນ, ຂຽນ, ອ່ານຢູ່ໃນວັດ. ວັດຈຶ່ງສະແດງອອກທຸກສິລະປະ ກາຍເປັນວັດທະນະທັມອັນຈົບງາມຂອງລາວເຮົາ ແຕ່ວັດທະນະທັມອັນນີ້ຈະຢູ່ນຳພວກເຮົາໄດ້ດົນປານໃດ ? ກ້າຫາກຫນໍ່ແຫນງບໍ່ໄດ້ຮັບການປູກຝັງແຕ່ເຍົາໄວ ພາຍຫນ້າກໍ່ຈະບໍ່ມີພະສົງສືບທອດ ຫລາຍວັດກາຍເປັນວັດຮ້າງ ຄົນບໍ່ມີຄວາມຮູ້ເລື່ອງວັດວາສາສະນາ ບໍ່ຮູ້ເລື່ອງ ທັມມະວິນັຍ ບໍ່ຮູ້ທີ່ໄປທີ່ມາຂອງຮີດຄອງ ຍັງເຂົ້າໃຈເປັນເລື່ອງໄກຕົວ, ງົມງວາຍ(ຍ້ອນບໍ່ຮຽນຮູ້) ເລີຍບໍ່ມີພູມຄຸ້ມກັນ. ສຸດທ້າຍກໍ່ເຫັນວັດທະນະທັມຂອງຊາດອື່ນ ເປັນເລື່ອງດີ ແລະ ສຳຄັນກວ່າ ຍອມຮັບເອົາແບບບໍ່ຮູ້ສຶກຕົວ.

ສຳລັບຜູ້ມີເງື່ອນໄຂໄດ້ບວດແຕ່ນ້ອຍໆ ບໍ່ໄດ້ເຂົ້າໂຮງຮຽນມາຈັກເທື່ອ (ອ້າຍຈົວນ້ອຍ) ສົມຄວນໃຫ້ ເຂົ້າຮຽນຊັ້ນປະຖົມ ຫລື ມັດທະຍົມທີ່ໃກ້ຄຽງຮ່ວມກັບຄາລະວາດ. ເຖິງວ່າບວດຢູ່ວັດ ແຕ່ຍັງມີຫລາຍອົງກໍ່ສິກຂາລາເພດໄດ້ກາຍເປັນພົນລະເມືອງດີມີຄວາມຮູ້ເລື່ອງສືບທັມໄປພ້ອມ ປະກອບສ່ວນໃນການສ້າງບ້ານແປງເມືອງ ສືບຕໍ່ຮີດບ້ານຄອງເມືອງອັນດີງາມໄວ້. ແຕ່ກົງກັນຂ້າມ ກ້າຫລາຍຄົນຄິດວ່າບວດແລ້ວບໍ່ຄວນຮຽນຮູ້ທາງຝ່າຍໂລກ ຕັ້ງຫນ້າຕັ້ງຕາຕັດກິເລດຢ່າງດຽວ ຜູ້ຫນຸ່ມນ້ອຍສືບທອດກໍ່ບໍ່ມີເຮັດໃຫ້ພວກເຮົາຂາດບຸກ ຄະລາກອນຫາຜູ້ໃຫ້ພອນຕໍ່ຫນ້າໄປບໍ່ມີເລີຍ ເສຽວັດທະນະທັມ. ຜູ້ນຳເຮົາເຄີຍເວົ້າວ່າ " ເສຽວັດທະນະທັມຄື ເສຽຊາດ" ສະນັ້ນການສຶກສາພາກບັງຄັບ ແຕ່ລະທ້ອງຖິ່ນບໍ່ຄວນປະຕິເສດ ຫລືກີດກັນຜູ້ບວດຢູ່ວັດກໍ່ຄືຜູ້ເຊື່ອຖືຫລື ບໍ່ເຊື່ອຖືສາສນາ.

ທ່ານ ສີວິໄລ ປັນແກ້ວ ຫົວຫນ້າຜະແນກສຶກສາແຂວງຫລວງນ້ຳທາໄດ້ກ່າວໃນໂອກາດ ທ່ານເຂົ້າຮ່ວມເປີດໂຮງຮຽນສົງທີ່ວັດຫລວງຂອນ ບາງຕອນທ່ານກ່າວວ່າ: " ແຕ່ບູຮານ ວັດເປັນບ່ອນສຶກສາຮ່ຳຮຽນ ໃຫ້ຄວາມຮູ້ປວງຊົນທົ່ວໄປ ໃນເມື່ອໂຮງຮຽນໄດ້ແຍກອອກຈາກວັດ ຄົນບວດຢູ່ວັດກໍ່ມີສິດນຳໄປຮຽນໄດ້ ກ້າບ່ອນນັ້ນຍັງບໍ່ມີໂຮງຮຽນສົງ ພຽງແຕ່ມັນບໍ່ມີວິຊາທັມມະ, ວິນັຍ, ພຸດທະປະຫວັດ ແລະພາສາປາລີ. ໃນທົ່ວ ແຂວງ ພວກເຮົາກໍ່ມີລູກຫລານໄດ້ບວດຫລາຍສົມຄວນ ແຕ່ຍັງບໍ່ມີໂຮງຮຽນສົງ ສະນັ້ນແຕ່ລະໂຮງຮຽນ ຜ່ານມາກໍ່ໄດ້ຮັບເອົາເຂົ້າຮຽນຕາມຊັ້ນປະຖົມ ແລະ

ປັດທະຍົມທີ່ຢູ່ໃກ້ຄຽງ. ມີບາງວິຊາທຣຽນ ຈົວເນນເພິ່ນບໍ່ສາມາດເຮັດນຳໄດ້ເຊັ່ນ : ກິລາ, ຮ້ອງເພງ ຫລື ອອກແຮງງານອື່ນໆ ກໍ່ໄດ້ນະໂຍບາຍເພາະວ່າຢູ່ວັດນັ້ນ ວິຊາເຫລົ່ານີ້ກໍ່ມີຫລາຍຢູ່ແລ້ວ ຕ່າງແຕ່ວ່າວິທີເອີ້ນຊື່ເທົ່ານັ້ນ. ເວົ້າລວມການສຶກສາເປັນຂອງທຸກຄົນກ້າຄົນໃນຊາດມີຄວາມຮູ້ສູງ ຄວາມຈະເລີນ ກໍ່ຍິ່ງໄວຂຶ້ນເປັນເງົາຕາມຕົວ".

ເພື່ອຮັກສາໄວ້ວັດທະນະທັມອັນດີງາມ ເຖິງແມ່ນບໍ່ກືກໃຈກໍ່ຕ້ອງໄດ້ພ້ອມກັນສືບສານທະນຸບຳລຸງໝູນໃຊ້ໄປຕາມການເວລາ ໃຫ້ມີຄຸນຄ່າຄືຄຳເພິ່ນວ່າ :

ນົບພຣະພຸດ ໄປກືກປະຕິມາກຳ (ຮູບປັ້ນ)

ນົບພຣະທັມໄປກືກໃບລານ (ຂຽນຫນັງສືໃສ່)

ນົບລູກຫລານ ໄປກືກພຣະສົງ (ຜູ້ບວດຮຽນ)

ວັດທະນະທັມອັນນີ້ ມີທັງບຸນທັງຄຸນໄປພ້ອມກັນ ຍ່ອມໃຫ້ປະໂຫຍດແກ່ຄົນລາວເຮົາຕລອດໄປ.



ອ້າຍຈົວນ້ອຍ
ວັດປັນທະຄາມ
(ກາງ)
ມ. ຫາແອກ.
ເຮັດອານາໃນໃບລານ



ອ້າຍຈົວນ້ອຍ
(ຈົວຈ່ອຍ)
ຢູ່ວັດບ້ານໂພນໂດກ
ເຂດໄຊສຳພັນ
ມ.ຈຳພອນ
ອອກແຮງ
ຕີກອງແລງ

ຕໍ່ຈາກໜ້າ 11

ກົດນັ້ນກູ ພະອົງຈັກທະລົງສານງາງົງງອນສຸດຂະໜາດ ໃຫ້ໃສ່ຄຸມສັງກຣາດເດຽຣະດາດ ແລ້ວດ້ວຍມຸກດາຊ້າງຕົວນັ້ນຊື່ວ່າ ທັດກີ ຄັນທະ ວໍຣະນາ ຕົວປະເສີດ ເກີດໃນກະກຸນແມ່ຊ້າງ ທ້າງແລ້ວ ນາຍທ້າຍໃຫ້ກືຣິ່ມຂາວ ຍອຍຫູໃຫ້ລຳນຳແທນແຫ່ຫລາຍຫລາກ ໃຫ້ຟ້ອນດາບປັດຕະເພນີ. ກົດນັ້ນນາງຜຸດສະດິຕົນເປັນເອກໃຫ້ຂີ່ຊ້າງ ແກ້ວເມກຄລາອາດ ຜາສາດຕັ້ງເໜືອຫລັງ ແພດອກຄຳບັງສອງຂ້າງ ຜ້າຄຸມຊ້າງໃສ່ດາວຄຳ ລຳນຳຕົວ ໃຫ້ປະດັບແກ້ວ ທ້າງແລ້ວໃສ່ກະດິ່ງຄຳ.

ກົດນັ້ນ ນາງບັກສະໝົມໃຫ້ຂີ່ຊ້າງ ຜັງຕົວດີຂນາດ ເດຽຣະດາດໃສ່ຟອງຄຳ ຊ້າງພອງດຳໃສ່ນາງສາວພີ່ນ້ອງໃຫ້ປະດັບເຄື່ອງຢ້ອງດູດີ ມີສີຂາວຜີວຜ່ອງ ຄື້ວຄາດກ່ອງກົມງາມ ຜົງນົງຮາມລ້ຳເລີດ ແວນປະເສີດແກ່ຕາ ຄົນທັງຫລາຍໃຫ້ໃສ່ດາຣະວັງສອງຂ້າງ ໄທໜ້າຈ້າງໃຫ້ກືໜ້ານຸບຫລັງ. ຣາຊາ ອັນວ່າພຍາບູຣົມມະສີສົນໄຊ ໄອຍະໂກໂພທິລາດ ຕົນເປັນອາດໃນເມືອງແກ້ວປະເຊໄຊ ມີພະຣາຊະອາດຍາ ໃສ່ຫົວເສນາ ໃຫ້ປະດັບປະດາທຸກທີ່ ເພື່ອໃຫ້ລູກມະຫາຣາຊະເຈົ້າຈັກສະເດັດເຂົ້າມາເມືອງ ນັ້ນກໍມີແລ.

# ໂຊກດີທີ່ມາທັນ

*ໂດຍ ກ. ວໍຣະເຜັດ*

***ເກືອບ*** 5 ໂມງແລງຂອງວັນທີ 10 ພະຈິກ 2001 ໜ່ວຍສຳຫລວດໜັງສືໃບລານຈຶ່ງບຸກບືນໄປຮອດບ້ານຫົວນາ ໂດຍຜ່ານປ່າດົງຕຶບໜາສອງຟາກທາງ ທີ່ທຸລະກັນດານເຕັມແຕ່ປ່າສະເມັກກຳລັງປົ່ງໃບອ່ອນ.

ເມື່ອພວກເຮົາເຂົ້າໄປເຖິງບ້ານ, ທ່ານຄຳລາຍ ຜູ້ຕາງໜ້າວັດທະນະທັມແຂວງ, ທ່ານຄຳຜັນ ຫົວໜ້າຫ້ອງການວັດທະນະທັມ ເມືອງຫີນບູນ ກໍໄດ້ປະສານງານກັບນາຍບ້ານ ເຖົ້າແກ່ແນວໂຮມອຳນາດການປົກຄອງໄດ້ມາເຕົ້າໂຮມຢູ່ວັດ, ຫົວໜ້າທີມງານອາຈານຄຳສິງ ວົງສະຫວ່າງ ໄດ້ລາຍງານຈຸດປະສົງ, ເປົ້າໝາຍຄວາມສຳຄັນ ແລະ ຄວາມຈຳເປັນຂອງວຽກງານການສຳຫລວດ ອະນຸລັກຮັກສາໜັງສືຜູກໃບລານໃຫ້ເຖົ້າແກ່ແນວໂຮມຕະຫລອດເຖິງການຈັດຕັ້ງທຸກພາກສ່ວນ ຟັງເປັນທີ່ຮຽບຮ້ອຍແລ້ວ ທີມສຳຫລວດຂອງພວກເຮົາ ກໍບໍ່ສ້າງຄວາມລຳບາກໃນການພັກເຊົາ ອໍອາໄສພັກຢູ່ທີ່ຫໍແຈກຂອງວັດ ເຊິ່ງພວກເຮົາຈະໄດ້ປະຕິບັດງານຕົວຈິງຢູ່ທີ່ນັ້ນ. ວັດບ້ານຫົວນາເປັນວັດເກົ່າແກ່ຕັ້ງຢູ່ໂນນສູງມີທົ່ງນາອ້ອມຮອບ ຕາມຜູ້ເຖົ້າໃນບ້ານເຂົາເຈົ້າບອກວ່າ ບ້ານຫົວນາຕັ້ງມາແຕ່ດົນນານແລ້ວ ສ່ວນວັດກໍຄາວດຽວກັນກັບບ້ານພຸ້ນແລ້ວ ຄວາມຈິງບໍ່ມີໃຜຮູ້ຄຳຕອບຢ່າງແນ່ນອນໄດ້. ແຕ່ໃນວັດມີທາດໜ່ວຍໜຶ່ງທີ່ເກົ່າແກ່ໄວ້ເປັນຫລັກຖານ ກືວ່າເປັນພຸດທະ ສິນລະປະ ສະໄໝລ້ານຊ້າງ ລັກສະນະຊົງດອກບົວລ່ຽມ ຄືກັບທາດຫລວງຕາມຄຳບອກເລົ່າຕໍ່ໆກັນມາຂອງເຖົ້າແກ່ໃນບ້ານທາດໜ່ວຍນີ້ ເຈົ້າໄຊຍະເຊດຖາເປັນຜູ້ສ້າງໄວ້ "



*ພິທີ ແຫ່ທັມ ຢູ່ບ້ານຫົວນາ ມ.ຫີນບູນ ແຂວງ ຄຳມ່ວນ*

ກ່ອນການສຳຫລວດ ສະພາບໜັງສືຜູກໃບລານສ່ວນໃຫຍ່ ກືກເກັບໄວ້ໃນຫີບທັມບູຮານທີ່ເກົ່າແກ່ສາມໜ່ວຍໃຊ້ເຊືອກຜູກແຂວນໄວ້ເທິງຂື່ກຸດຕິເຈົ້າອະທິການວັດນັ້ນເອງ, ໜັງສືບາງຜູກເກັບໄວ້ຕາມຮາວກຸດຕິ ຫ້ອຍໄວ້ຕາມເສົາ ຂາດການຫລຽວແລເອົາໃຈໃສ່ ບາງຜູກແຕກຫັກຜຸພັງຕົກໂມະ, ສາຍສະໜອງຂາດແຕກຜູກແຕກມັດ ມີທັງກືກໜູກັດກິດຫ້ຽນ ຈົນເກືອບຫາຊື່ເອກະສານບໍ່ໄດ້. ຫີບທັມເກົ່າແກ່ ຜຸພັງ ຊຳລຸດຊຸດໂຊມ ມີແຕ່ໄຍແມງມຸມ, ຕີລາຄາໄດ້ວ່າໜັງສືຜູກໃບລານບ້ານຫົວນາແຫ່ງນີ້ ຍັງບໍ່ທັນໄດ້ຮັບການຊຳລະສະສາງຈາກພາກສ່ວນໃດເລີຍ ຕາມການສຳຫລວດຂອງພວກເຮົາ ເຫັນວ່າໃນເຂດນີ້ ແມ່ນບ້ານຫົວນາມີໜັງສືຜູກໃບລານຫລາຍກວ່າໝູ່ 760 ຜູກ ແລະ ມີອາຍຸ ເກົ່າແກ່ເຖິງ 395 ປີ ຄື ເລື່ອງວັດກຸລູກເສດກີຕາຍ 1 ຜູກ.

ສະພາບການເປັນຢູ່ຂອງປະຊາຊົນບ້ານຫົວນາອາໄສທັມມະຊາດໃນການດຳລົງຊີວິດເກືອບຮ້ອຍເປີເຊັນ ຕາມການບອກເລົ່າຂອງຜູ້ເຖົ້າພາຍໃນບ້ານວ່າ ບ້ານຫົວນານີ້ ບໍ່ເຄີຍກືກເສິກສົງຄາມທຳລາຍຈັກເທື່ອ ເພາະເປັນທີ່ຫ່າງໄກສອກຫລີກ ແລະບໍ່ມີທາງຕິດຕໍ່ກັບໂລກພາຍນອກມາຫລາຍເສັ້ນຄົນ ໂຊກດີ ທີ່ໜ່ວຍງານໂຄງການໃບລານ ມາຊ່ວຍອະນຸລັກຮັກສາໜັງສືຜູກໃບລານວັດບ້ານພວກເຮົາ ທີ່ສຳຄັນຄືຄວາມໂຊກດີຂອງຊາດ ແລະ ສາສນາຂອງພວກເຮົານັ້ນເອງ ກ້າຫາກວ່າຊັກຊ້າໄປກວ່ານີ້ ອາດຈະເຫລືອແຕ່ຮອຍປວກ ຫລືຕຳນານບອກເລົ່າ " **ໂຊກດີທີ່ມາທັນ** "

# ຄວາມຜູກແຂນໃຫ້ໝໍພອນ

ເກັບກຳໂດຍ : ຄຳສິງ ວົງສະຫວ່າງ



**ການ** ບາສີສູ່ຂວັນຂອງເຜົ່າລາວເຮົາເພິ່ນນິຍົມເອີ້ນຂວັນໃຫ້ມາຢູ່ເນື້ອຢູ່ຄີງຜູ້ມາເອີ້ນນັ້ນແມ່ນໝໍພອນຫລືເວົ້າຢ່າງນຶ່ງ ວ່າພຣາມຫລືລຸງພາມກໍ່ວ່າ.

ໝໍພອນນີ້ມີຄວາມສໍາຄັນຫລາຍເພິ່ນເປັນບຸກຄົນທີ່ຊາວບ້ານໄວ້ເນື້ອເຊື່ອໃຈໃຫ້ຄວາມໂຄຣົບນັບກື ມີສິນທັມເປັນເກົ້າບ້ານສະພານເມືອງທັງເປັນຜູ້ ມີຄວາມຮູ້ ທາງຮີດຄອງປະເພນີເພາະສະນັ້ນ ລູກຫລານກໍ່ຄືຜູ້ເອົ້າຮ່ວມພາຂວັນ ຈິ່ງຍົກສູງຄື ໃຫ້ກຽດແກ່ລຸງພາມ ໂດຍຈັດຫາຝ້າຍຂາວເສັ້ນໃຫຍ່ກວ່າໝູ່ມັດແຂນໃຫ້ລຸງພາມ ພ້ອມທັງເງິນດອກໄມ້ ນອກນັ້ນກໍ່ແມ່ນປັດໄຈອື່ນໆ ສຸດແລ້ວແຕ່ສັດທາ ພ້ອມກັນຈັບໂຈມເອົາແຂນລຸງພາມແລ້ວມີຜູ້ນຶ່ງມັດແຂນໃຫ້ເພິ່ນກ່ອນ. ຄວາມມັດແຂນໃຫ້ໝໍພອນທາງແຂວງສະຫວັນນະເຂດເພິ່ນນິຍົມກັນວ່າດັ່ງນີ້:

ຮ້າຍກວາດໜີໆ ດີກວາດເຂົ້າເຊີນອີຕາພາມເກົ້າມາຜູກແຂນຫລານມີພາໂຕະພາພານລາບໝູ ແກງໄກ່ຕັກໃສ່ກ້ວຍໃຫຍ່ໆມາໃຫ້ອີລຸງພາມວ່າມາເຢີລຸງພາມເອີຍ ຜູກແຂນເບື້ອງຊ້າຍໃຫ້ຂວັນເຈົ້າມາ ຜູກແຂນເບື້ອງຂວາໃຫ້ຂວັນເຈົ້າເຕົ້າ ໃຫ້ເຈົ້າໄດ້ເຂົ້າລົ້ນຂີ່ເຫລືອເຍຽ ໃຫ້ເຈົ້າໄດ້ເມຽນາງສາວໜຸ່ມນ້ອຍ ຝູງສາຍສ້ອຍເມຽເຈົ້າໄດ້ພາຍ ໃຫ້ເຈົ້າມີງົວຄວາຍເຫລືອຫລາຍເຕັມຄອກ ອໍ້ອອກແລ້ວເປັນເງິນເປັນທອງ ໃຫ້ເຈົ້າມີຂອງໃຊ້ໃນໂຮງຄັບຄັ່ງ ມີທັງອຸແອ່ງປ້ຳກະບວຍພ້ອມສູ່ປະການ. ເຫລັກໃບດີດວງກ້າຂວານເພພ້າບ່ານ ມີທັງມີດສະນາກອີ່ຫ້ຽມ ກະບຽນໃຊ້ຢ່າຂາດເຂີນ. ອັນນຶ່ງນາງມັດທີນ້ອຍ ພາມມະນາດຶງແກ່ໄປເດີ ເຊືອກຜູກຄ້ອງຄໍນ້ອງແກ່ໄປໃຫ້ເຈົ້າພາກັນເຂົ້າ ອະຣັນຍາທີເກື່ອນກັບທັງສຽມອີ່ກົ້ນ ຂຸດໄມ້ກິ່ນມັນ ມັນສະຫລາພ້ອມທົວສະເພົາມັນໂງ່ ໃຫ້ເຕັມກົງໂອ້ໂປ້ ເມຽເຈົ້າຈິ່ງຄອຍພາຍ ຂອງກິນຫລາຍເຫຼືອລົ້ນ ເຕັມພາເດຽລະດາດ ສຸກມາດໆ ກັບເຫລົ້າເດັດປາປີ້ງໝາກຂີງແຂ່ງໝາກເຂືອຂື່ນ ໃຫ້ລຸງພາມໄດ້ຍ້ຳຕິຕັກຕິຕົ໋ວ ນົວແກ້ມຢ່າຂາດຄໍ ໃຫ້ພາມ ມະໂນມີສີໃສເຫລື້ອມພາມມະນາທ້ອງໃຫຍ່ ໃຫ້ໄດ້ກິນຕົ້ມໄກ່ຢູ່ເລື້ອຍໆ ຍືນໝັ້ນໝື່ນປີ ຝ້າຍເສັ້ນນີ້ອີນປ່ອນລົງທານ ເອົາໃຫ້ຫລານຜູກແຂນພາມເກົ້າ ຂໍໃຫ້ສີແຈ່ມເຈົ້າຍືນໝັ້ນໝື່ນປີ ນັ້ນທ້ອນ ອາຍຸ ວັນໂນ ສຸຂັງພະລັງ ໝັ້ນຍືນໆ.

(ຈາກຈານແກ້ວແນວໂຮມບ້ານໜອງລໍາຈັນ ເມືອງຈໍາພອນ ).

# ມະຣາດສາຍພິນ

*(ໄດ້ຈາກວັດ ສີກຸໃນ ໂພນໄຊ, ບ້ານນົກກົກ, ເມືອງຈຳພອນ ແຂວງສະຫວັນນະເຂດ)*

ໂດຍ : ມະຫາບຸນຍົກ ແສນສູນທອນ

ນັກແຕ່ງຫລືນັກພາສາສາດເຮົາຈິ່ງໄດ້ພິຈາລະນາຄົ້ນຄວ້າເບິ່ງຄວາມເກັ່ງກ້າສາມາດ ຂອງນັກແຕ່ງບູຮານວ່າເລີກເຊິ່ງພຽງໃດ ທາງດ້ານພາສາວັນນະຄະດີລາວ.

ກົດນີ້ນໄທເສຍ ແລະ ໄທກອງ ຕະໂພນຕີ່ງຕ່ອງ ພິນພາດຄ້ອງ ສຽງອຸ່ຍເພງລະບຳ ດຸຣິຍະນິມິຕ ຜູ້ດູດີຣະໃພ່ ໃຫ້ຄຶດໂລມໄລ້ໃສ່ສາຍພິນ. ພິນທັງຫລາຍ ມີ 42 ສາຍ.

ສາຍນຶ່ງ ຊື່ວ່າ ເສດຖາກາ ດັງຂຶ້ນເມືອເວຫາອາກາດ
ສາຍນຶ່ງ ຊື່ວ່າ ເທບພະຣາດ ໂມທະນາ
ສາຍນຶ່ງ ຊື່ວ່າ ອິນທາລົງຫລິ່
ສາຍນຶ່ງ ຊື່ວ່າ ທ້າວກໍກິນເມືອງ
ສາຍນຶ່ງ ຊື່ວ່າ ເຮືອງທົ່ວດ້າວ
ສາຍນຶ່ງ ຊື່ວ່າ ງ້າວກັ້ງກາດ ບຸນເຮືອງ
ສາຍນຶ່ງ ຊື່ວ່າ ນາງຜຸດສະດີ ນອນພາກຄູ່
ສາຍນຶ່ງ ຊື່ວ່າ ເກີດແຕ່ປູ່ແສນປີ
ສາຍນຶ່ງ ຊື່ວ່າ ຊິນບູລີ ຄ້ອງແຂນສາວພ່ອມ
ສາຍນຶ່ງ ຊື່ວ່າ ກ່ອມນາງນອນ
ສາຍນຶ່ງ ຊື່ວ່າ ນອນຮຽງຄູ່
ສາຍນຶ່ງ ຊື່ວ່າ ຢູ່ຫຽມຕົມ ກໍຍັງຮູ້ຮ້າງ
ສາຍນຶ່ງ ຊື່ວ່າ ຊ້າງຢູ່ປ່າກໍຍັງມາຫາ
ສາຍນຶ່ງ ຊື່ວ່າ ມາລາດວງໄຂກາບ
ສາຍນຶ່ງ ຊື່ວ່າ ຜາບຊຸມພູ
ສາຍນຶ່ງ ຊື່ວ່າ ສາວມາດູ ກໍຍ່ອມຍ້ອງ
ສາຍນຶ່ງ ຊື່ວ່າ ຊ້ອງຢູ່ເກົ້າ ກໍຮ່ວງຕົກເສີງ
ສາຍນຶ່ງ ຊື່ວ່າ ເມັຽຫຽມຕົມ ກໍຍັງຮູ້ຮ້າງ
ສາຍນຶ່ງ ຊື່ວ່າ ສາວແມ່ຮ້າງ ເປື້ອງປີ້ນອ້າງ ໃຫ້ບ່າວບາຍນົມ
ສາຍນຶ່ງ ຊື່ວ່າ ຊົມບໍ່ແລ້ວ
ສາຍນຶ່ງ ຊື່ວ່າ ແກ້ວລອດຟ້າ ແລ້ວຈຶ່ງລົງມາ
ສາຍນຶ່ງ ຊື່ວ່າ ສາວຄຳພາໄຫ້ຫາຊູ້
ສາຍນຶ່ງ ຊື່ວ່າ ບ່າວບໍ່ສູ້ ສາວຫາກສະແຫວງຫາ
ສາຍນຶ່ງ ຊື່ວ່າ ສາວຫລ້ານົວພາ ໄຫ້ຫາຜົວ ຢູ່ຈິແຈ້ວງ
ສາຍນຶ່ງ ຊື່ວ່າ ແກ້ວມຸງເມືອງ
ສາຍນຶ່ງ ຊື່ວ່າ ເຮືອງທົ່ວບ້ານ
ສາຍນຶ່ງ ຊື່ວ່າ ປ້ານພົນແສນ
ສາຍນຶ່ງ ຊື່ວ່າ ແມນລົງຫລິ່
ສາຍນຶ່ງ ຊື່ວ່າ ຊູ້ພາກຂ້າງພອຍນອນ
ສາຍນຶ່ງ ຊື່ວ່າ ມືຊອນຄໍ ບາຍນົມຈູບແກ້ມ
ສາຍນຶ່ງ ຊື່ວ່າ ແຍ້ມໆ ແລ້ວຈຶ່ງຈາຣະຈາ
ສາຍນຶ່ງ ຊື່ວ່າ ສາວຈັນທາ ເປີດຊູ້ລືມຜົວ
ສາຍນຶ່ງ ຊື່ວ່າ ສາວມົວເມົານຳບ່າວ
ສາຍນຶ່ງ ຊື່ວ່າ ຍິງສະຫງວນສູ້ ສະອອນຊາຍ
ສາຍນຶ່ງ ຊື່ວ່າ ບາຍແຂນສາວກໍຍ່ອມຍ້ອງ
ສາຍນຶ່ງ ຊື່ວ່າ ຟ້າສະນັ່ນກ້ອງເວຫາ
ສາຍນຶ່ງ ຊື່ວ່າ ນາງສິດາຍ່ອນແກ້ວ ດີດແລ້ວດັງທົ່ວທ້ອງທໍຣະນີ ທັງອິດກີບຸດຕະຣາດ ຜູ້ສະຫລາດຕັ້ງມາຟັງ
ສາຍນຶ່ງ ຊື່ວ່າ ສາວພ່ອມໄຫ້ຫາຜົວ ສຽງດັງນົວ ສັດຕູຜ່ານ ທັງສີ່ດ້ານປະນົມມາ
ສາຍນຶ່ງ ຊື່ວ່າ ບຸດສະບາ ບານຊື່ນຊ້ອຍ ສຽງອື່ນອ້ອຍ ອໍຣະຊອນ ຄືດັ່ງສຽງເສບເທບພະໄທ້ ສາວສະຫວັນ ຄວນທີ່ອັດສະຈັນງຶດງໍ້ ເຫລືອຫລາຍ ໝາຍມາລ່ຳ ສາວຮາມ ໂສມຄີງງາມເບື້ອມຸ່ຍ ອຸ່ຍຫຸ່ຍໜ້າ ຂວັນພອງ
ສາຍນຶ່ງ ຊື່ວ່າ ສຽງອຸ່ຍແກ້ວພະຍາອິນ ໃນດິນແດນ ຈັກຫຽມແທບເຖິງສອງກໍຍັງຍາກ ກ້ວນທຸກພາກ ປີ່ທໍ້ ແລະ ສອນໄລ ເພຣະເພງໃຂ ສຽງອ່ອນສຸກທ່ອນທ້າວ ເມືອງສະຫວັນ ມາຟ້ອນຫລິ້ນ ຫລາກນາໆ ເສດຕະສັດຄັນງາ ກົ້ງຫລາຍຫລີບ ໃຫ້ລູກທ້າວແບກງ້າວ ສືບກັນໄປ.

ອ່ານຕໍ່ໜ້າ 8

# ບັນດິດສອນລູກ

*(ລານວັດປ່າຈະໂລະ ມ.ວິຣະບູລີ)*

*ຖອດຄວາມໂດຍ : ບ. ທຳມະຈັກ*

ເພີ່ນວ່າ: ຄົນທັງຫລາຍ ໃນໂລກນີ້ ຫາກແຂນຄໍກັບປະກິບ ຈິງແລ້ວ
ກໍຫາກ ເສັງສ່ຽງໄດ້ ຕາມກ້ານແຫ່ງບຸນ ທັ້ນແລ້ວ
ຄັນແມ່ນ ບຸນມີໄດ້ ຍັງເມຽຜູ້ປະເສີດ ຈິງເນີ
ຄັນວ່າ ບຸນຫາກນ້ອຍ ບໍ່ຫວັງໄດ້ກ້ານດີ ເຈົ້າເຮີຍ

ອັນວ່າ ເອົາເມຽນີ້ ຢ່າຫວັງເອົາດ້ວຍງ່າຍ ຈິງເນີ
ລາງເທື່ອເອົາ ບໍ່ເປັນປະໂຫຍດໄດ້ ມາໄວ້ແກ່ມກິນ ທັ້ນແລ້ວ
ໃຫ້ຄ່ອຍ ແຍງເອົາທ້ອນ ອິນທາເຈົ້າຜ່ ກູເອີຍ
ຍິງໃດ ຍັງກຶກດ້າມ ເອົາໄດ້ກໍຈຶ່ງດີ ແທ້ດາຍ

ລາງຄົນ ລອນທ່ເດືອງໆສັ້ນ ຜືນດຽວວັນຄ່ຳ ພໍ່ດາຍ
ເຄື່ອງນຸ່ງ ມີທ່ນັ້ນ ກໍລອນເອ້ມ່າຍຊາຍ ທັ້ນແລ້ວ
ລາງຄົນ ລອນທ່ຈາຣະຈາຕ້ານ ຫວານຫູກ້ຽງແຕ່ປາກ ກໍມີ
ລອນທ່ ກ້ຽງແຕ່ລີ້ນ ໃຈລ້ຽວພາກກະດອມ ແທ້ດາຍ

ລາງຄົນ ປາກກ່າວຕ້ານ ກວ້າງແຜ່ຫຸມຫິວ ກໍມີ
ບາດວ່າ ໃນເຮືອນພອງ ດັ່ງພາກຄາຍ ເດືອນຫ້າ
ອັນວ່າ ໃຈຄົນນີ້ ນານາກໍຍັງຕ່າງ ກັບດາຍ
ໃຜຜູ້ ຍັງຢາກຮູ້ ໃຫ້ແຍງໄມ້ຢູ່ດົງ ທັ້ນທ້ອນ

ລາງລຳ ງາມລື່ນລັ້ນ ໃຈໂຄ່ງເປັນຮູ ກໍມີ
ລາງລຳ ເປັນຕາຄົດ ແກ່ນແຂງຂວານເປ້ ພຸ້ນດາຍ
ລາງລຳ ປາຍກຸດດ້ວນ ບໍ່ມີແກນອັນຊິແກ່ນ ກໍມີດາຍ
ລາງລຳ ໂງະເງະພົ້ນ ເປືອນລ້າວກົ່ວປົມ ດອກນາ

ອັນວ່າ ໃຈຄົນນີ້ ສະເໝີລຳໄມ້ປ່າ ຈິງແລ້ວ
ໃຫ້ຄ່ອຍ ຄິດກີ່ແທ້ ໃຈແຈ້ງສູ່ອັນ ເຈົ້າເຮີຍ
ລາງຄົນ ແພດໆຕ້ານ ເຫລືອໂຕ ກ້ຽງແຕ່ປາກ
ສ່ວນວ່າ ວຽກເລົ່າຄ້ານ ຫລາຝ້າຍ ບໍ່ຢາກບາຍ

ບາດວ່າ ກິນທານສ້າງ ປາງບຸນອັນປະເສີດ
ມັນທ່ ໄປທ່ຽວບ້ານ ຍືມຜ້າເພື່ອນທະລົງ ກໍມີ
ອັນວ່າ ຜົວເມຽນີ້ ຢ່າຫວັງເອົາດ້ວຍງ່າຍ ຫລາຍທ້ອນ
ບາດວ່າ ໄດ້ຜູ້ຮ້າຍ ມັນຊິຫຍຸ້ງແກ່ໃຈ ແທ້ດາຍ.

# ພາບຍັງຈິດຈໍາ

ໂດຍ ກ. ວໍຣະເຜີດ

**ວັນ** ທີ 8 ພະຈິກ 2001 ພວກເຮົາປ່ຽນທິດທາງໄປສູ່ບ້ານນາອັ້ນ, ການເດີນທາງຜ່ານບໍ່ກົ່ວໂພນຕິ້ວ ເສັ້ນທາງພໍໄປໄດ້ ແຕ່ບັງເອີນຈາກບໍ່ກົ່ວໄປຫາບ້ານນາອັ້ນ ບໍ່ມີທາງລົດ ຈະມີກໍແມ່ນທາງບຸກເບີກໄປຕາມເສັ້ນທາງຫລັກສາຍໄຟຟ້າແຮງສູງເຂື່ອນນ້ຳເທີນ ເປັນທາງທີ່ແສນກັນດານມີແຕ່ດົງໜາປ່າຕຶບ ໜ່ວຍສຳຫລວດພວກເຮົາແລ່ນໄປໄດ້ກິໂລແມັດນຶ່ງກໍຕ້ອງໄດ້ຈອດ ໄປບໍ່ໄດ້ເພາະມີແຕ່ຂຸມແລະຕໍໄມ້ ຈຶ່ງກັບຄືນມາຍືມພາກຈັກພ້ອມກັບຂໍຄວາມຊ່ວຍເຫລືອຈາກໂຍທາບ້ານໂພນຕິ້ວ ເປັນຜູ້ນຳທາງ ລົດລາບ່ອນໃດກໍຂຸດດິນມາກົມ ຂຸດຕໍໄມ້ອອກຈາກທາງແລ້ວຄ່ອຍໆແລ່ນໄປ ໃນທີ່ສຸດກໍໄປເຖິງເປົ້າໝາຍ ຄືບ້ານນາອັ້ນ.

ຕອນນັ້ນເປັນເວລາ 11: 30 ໂມງ ໃຊ້ເວລາເດີນທາງ 4 ຊົ່ວໂມງເຄິ່ງໃນໄລຍະທາງປະມານ 4 ກິໂລແມັດ. ເມື່ອລົດໜ່ວຍສຳຫລວດຂອງພວກເຮົາໄປເຖິງບ້ານ ຄ່ອຍໆແລ່ນຜ່າກາງບ້ານ ໄປຕັ້ງຈຸດຢູ່ທີ່ວັດ, ປະຊາຊົນຊາວບ້ານນາອັ້ນທັງເດັກນ້ອຍ ແລະ ຜູ້ໃຫຍ່ແລ່ນມາຕ້ອນຮັບຫຸ້ມລ້ອມໜ່ວຍສຳຫຼວດດ້ວຍສີໜ້າທີ່ຕື່ນເຕັ້ນ ແລະ ສົງໄສ ບາງຄົນວ່າແມ່ນຕຳຫລວດ, ບາງຄົນວ່າພໍ່ຄ້າຂາຍເຄື່ອງ ຫລືວ່າ ຄະນະໝໍລຳເລື້ອງ " ຄືບໍ່ມີບາງເອກ" ນີ້ຄືຄຳສົນທະນາຂອງພວກເຂົາເຈົ້າໃນເບື້ອງຕົ້ນເມື່ອໄປເຖິງວັດແລ້ວທາງພະນັກງານ ທ່ານ ຄຳຜັນ ຫົວໜ້າຫ້ອງການ ວັດທະນະທັມເມືອງຫີນບູນ ແລະ ທ່ານ ຄຳລາຍ ຜູ້ຕາງໜ້າວັດທະນະທັມແຂວງຄຳມ່ວນ ກໍໄດ້ໄປປະສານງານກັບອຳນາດການປົກຄອງ ເຖົ້າແກ່ແນວໂຮມບ້ານ ແລະ ການຈັດຕັ້ງທຸກພາກສ່ວນ ຕະຫລອດທັງເຈົ້າອະທິການວັດເພື່ອເຕົ້າໂຮມ ແລະ ແຈ້ງຈຸດປະສົງ.

ໜັງສືຜູກໃບລານວັດໂພສີບ້ານນາອັ້ນ ເມືອງຫີນບູນແຂວງຄຳມ່ວນ ໄດ້ຖືກເກັບໄວ້ເທິງຂື່ (ຄວ່ານ) ຂອງກຸຕິວັດ ບາງຜູກບາງມັດມີຜ້າຄຳພີຫໍ່ ບາງຜູກບໍ່ມີຫຍັງຫຸ້ມຫໍ່ເລີຍ ເອກະສານໃບລານຕົກຢູ່ໃນສະພາບທີ່ຊຸດໂຊມຜຸພັງຢັ່ງຢາຍຕາມຂື່ຕາມຮາວ ບາງຜູກຖືກໜູກັດແຫ້ງກອບແຕກຫັກ, ສາຍສະໜອງຂາດ, ສ່ວນຫລາຍບໍ່ສາມາດເກັບມາຄືນໃໝ່ໄດ້ອີກ ສະພາບດີ ແລະ ໃຊ້ໄດ້ໜ້ອຍຕາມຄຳບອກເລົ່າຂອງເຈົ້າອະທິການວັດ ເພິ່ນວ່າ " ເມື່ອກ່ອນ ໃນວັດນີ້ມີຄົນບວດຫລາຍໜັງສືຜູກໃບລານກໍມີຄົນຮຽນຂຽນຮຽນອ່ານ ແຕ່ປັດຈຸບັນບໍ່ມີເລີຍ ບາງຜູກບາງມັດບໍ່ເຄີຍໄດ້ຕ້ອງຈັກເທື່ອ ຮູ້ວ່າມີແຕ່ບໍ່ເຄີຍເຫັນ ບໍ່ເຄີຍໃຊ້ " ປັດຈຸບັນມີພຣະອົງດຽວ (ຍາປູ່ເຖົ້າໆ) ເປັນຜູ້ຮັກສາວັດ.

ເວລາ 11 : 30 ໂມງທ່ຽງຂອງວັນທີ 10 ພະຈິກ 2001 ການສຳຫລວດຂຶ້ນບັນຊີໜັງສືໃບລານຢູ່ທີ່ວັດໂພສີບ້ານນາອັ້ນ ກໍສຳເລັດລົງຢ່າງຈົບງາມ ມີຫນັງສື ຈຳນວນ 494 ຜູກ 47 ເລື່ອງ ຈາກນັ້ນຊາວບ້ານໄດ້ພ້ອມພຽງກັນທຳພິທີແຫ່ທັມ ປະຊາຊົນພາຍໃນບ້ານມາຮ່ວມກັນເກືອບໝົດຈົນນັບບໍ່ໄດ້. ມາຮອດເວລານີ້ ຊາວບ້ານຈຶ່ງຮູ້ວ່າແມ່ນລົດຂອງພວກໃດ ຊາວບ້ານຄົນໜຶ່ງ ເວົ້າວ່າ " ນາອັ້ນເປັນຊົນນະບົດບ້ານນອກ ດຳລົງຊີວິດດ້ວຍຄວາມຍາກຈົນ ແຕ່ມີຈິດໃຈກວ້າງຂວາງ ຂໍຕ້ອນຮັບທີມງານສຳຫລວດໃບລານດ້ວຍນ້ຳໃຈ ເວົ້າເຖິງຄວາມສີວິໄລທັນສະໄໝ ບາງຄົນບໍ່ຮູ້ຊ້ຳວ່າແນວໃດ ແຕ່ເວົ້າເຖິງນ້ຳໃຈໂອບເອື້ອອາລີຮັກຊາດຮັກສາສນາ ບໍ່ເຄີຍເຫືອດແຫ້ງ ຫ່າງຫາຍຈາກປະຊາຊົນຊາວບ້ານນາອັ້ນນີ້ຈັກເທື່ອ".

ຕະຫລອດ 3 ວັນ 2 ຄືນ ທີ່ຊາວບ້ານນາອັ້ນໄດ້ເອົາໃຈໃສ່ຕິດຕາມ ແລະ ຕ້ອນຮັບດູແລ ທີມງານສຳຫລວດຂຶ້ນບັນຊີໜັງສືຜູກໃບລານຂອງພວກເຮົາເປັນຢ່າງດີຂ້າພະເຈົ້າສະເກັດປຶ້ມບັນທຶກ ກ ວໍຣະເຜີດ ແລະ ທີມງານ ຂໍຂອບໃຈເປັນຢ່າງສູງ ຂໍຈົດຈຳ ແລະຂໍຈາລຶກນ້ຳໃຈຂອງປະຊາຊົນຊາວບ້ານນາອັ້ນໄວ້ໃນຂ່າວໃບລານນີ້ ເພື່ອເປັນ ອານຸສອນ ແລະ ກາມຂ່າວເຖິງບັນດາເຖົ້າແກ່ພໍ່ແມ່ປະຊາຊົນທຸກທົ່ວໜ້າ.



ຊາວບ້ານ ໆ ນາອັ້ນ ມ. ຫີນບູນ

# ໂຕງໂຕຍຄຳເວົ້າບູຮານ

( ລານກ້ອມວັດດົງຍາງ ມ. ໜອງບົກ )
ຮີບໂຮມໂດຍ ບ. ທຳມະຈັກ

ເພິ່ນວ່າ, ນັບແຕ່ກໍ່ດິນທໍ່ຫົວຫຍ້າ ກໍ່ຟ້າທໍ່ຫົວຫອຍ
ກໍ່ພູກໍ່ດອຍທໍ່ຮອຍໄກ້ ກໍ່ໄມ້ທໍ່ລຳຫຽນ ພຸ້ນມາ
ນັບແຕ່ອະເນກະຊາອາຈານທ່ານແຕ່ງ ແຕ່ບູຮົມມະບາດບູຮົມມະກັບ
ຕັບບໍ່ຮະເມສວນເທິງຫານ ມື້ນນານເຈຍຮະການມາແລ້ວ
ເພິ່ນຕັ້ງ ທຳນອງຄອງສິບສີ່ ສິບຫ້າ ດວງມາດຮາດຊະອາດຍາ
ຫລັກຫງອກ ມອກໃສ່ຫົວ ຫາກໄດ້ຕັດຕິກາດ ບາດຄົງ
ຊົງພຣະກູນາໂຜດເກົ້າຍັ້ງຂະໜ່ອມ ປູກຝັງຕັ້ງແຕ່ງໄວ້ແລ້ວ
ຢາດນ້ຳໃສ່ຫີນ ລິນນ້ຳໃສ່ຂະໜ່ອມ ບອກນ້ຳໃຫ້ກິນ ບອກດິນໃຫ້ຢູ່
ຂີດເຂດໃຫ້ກື ບາຍມືໃຫ້ແຕ້ມ ເປັນພໍ່ (ໂມ) ລ້າຕາແສງ
ຮັກສາຂົງຂ່າຍ ຢາຍກົມ ເຂດຂົງກົງບຸລີຂອບແວ່ນແຄວ້ນເມືອງ
ຮັກສານ້ຳກຸ່ອນ ຕ່ອນດິນ ແຜ່ນດິນອິນພົມທຸກແຫ່ງ
ຮັກສາຊາຍຄາຍປາດຳ ຜ້າແກຸມແອ້ມກະສັດ
ເຜິ້ງຜານ່ງາ ໄມ້ຄົກກົກເຮື້ອ ຊ້າງຕາຍຂະໜາຍຫລ່ອນ
ຄຳຕ້ອນຄຳເຕືອນຝູງນີ້ ງົວລາກຫວາຍຄວາຍລາກຄ່າວ
ບ່າວລາກສາວເມື່ອຄ່ຳເມື່ອຄືນ ຂ້ອຍລັກໜີຊີລັກບວດ ກໍ່ດີ
ຂ້ອຍລັກຄ້າຂ້າລັກຂາຍ ຄວາຍລັກຂາຍ ງົວລັກຈ່າຍ ກໍ່ມີ
ຂ້ອຍລັກໄປ ໄທຜ່າດ່ານ ແຂກນ້ຳຄືນຫລວງ ກໍ່ດີ
ແຂກພູດທ້າຍບາຍເມືອງ ແຂກລູກປືນ ຄືນລູກທ້າວ
ແຂກຕາງໄກ ໄທຕ່າງດ້າວ ແຂກຕົກທ່າຜ່າບ້ານ ກໍ່ດີ
ໄຟເມືອງໃດໄໝ້ ໃຫ້ເອົານ້ຳເມືອງນັ້ນມອດ
ຕາບອດເມືອງໃດ ໃຫ້ເອົາຢາເມືອງນັ້ນໃສ່
ຕົກໜ້າໄຮ່ໃຫ້ພໍ່ໄຮ່ຈາ ຕົກໜ້ານາໃຫ້ພໍ່ນາຕ້ານ
ຕົກໜ້າບ້ານໃຫ້ພໍ່ແມ່ ຂຸນກວນບ້ານເມືອງຊຳຮະ
ທັງປວງປຶກສາສັນທະນາ ພິຈານສິ່ວຊຸມ
ເປັນຕົ້ນ ເຮືອຫລົ້ມກາງໜອງ ຂອງຕົກກາງບ້ານ ກໍ່ດີ
ທ້າວຍີ່ຕົກກາງເມືອງ ທ້າວເຈືອງຕົກເມື່ອລົ່ມ
ສີກົມສີກາຫວຍຍົກ ອຸບາສົກອຸບາສິກາ ອອກຕົນ
ສັກກະບານວານເຂົ້າ ເກົ້າແກ່ບ້ານເມືອງຊຳຮະ
ທັງປວງເປີກສາສັນທະນາ ປຸດສາໂຈດກາມວ່າກ່າວ
ເປັນຕົ້ນວ່າ ຫຍຸບເກົ້າເທົ້ານົມ ກອດຊົມດົມແກ້ມ
ຈັບມືກຶແຂນ ແບນມືກືນິ້ວ ກໍ່ດີ
ຈັບຈູ້ຍູ້ນົມກອດຊົມດົມແກ້ມ ຜິດຄອງທຳນອງເກົ່າ
ຮີດສິບສອງ ຄອງສິບສີ່ ໃນຕົວບົດກົດບາດ
ຮາດທິສາດຄອງບາລີ ໃນຄຳພີວິໄນຕິກາ
ປາຮາຊິກັນສມັນສມາສ ບາດເບື້ອງທັມມະບິດ.

( ໃຫ້ພິຈາລະນາເກີ້ນ ).

# ສືບມູນປັນຍາບັນພະບູລຸດລາວ

*ໂດຍ ພັນທະໂລພິກຂຸ*

ເມື່ອພວກເຮົາເອີ່ຍເຖິງ " ໂຕໜັງສືທັມ ມີຫລາຍໆຄົນມັກອຸທານອອກມາວ່າ : " ເອີ ! ໂຕໜັງສືທັມທີ່ເພິ່ນນິຍົມຂີດຂຽນໃນວັດວາສາສນານັ້ນ ຜູ້ທີ່ຮູ້ ແລະ ອ່ານໄດ້ກໍ່ຄວນຈະເປັນພຣະສົງອົງຄະເຈົ້າເທົ່ານັ້ນ ສ່ວນຄົນດີບດາຍພາຍນອກຜູ້ເປັນພໍ່ອອກ, ແມ່ອອກກໍ່ບໍ່ເຫັນວ່າຈຳເປັນທີ່ຈະຊອກຫາຮຽນຮູ້ດອກ "ຄວາມເຂົ້າໃຈຄືດັ່ງກ່າວມານີ້ລ້ວນແຕ່ເປັນຄວາມເຂົ້າໃຈທີ່ຜິດພາດທີ່ສຸດ ໃນຄວາມເປັນຈິງແລ້ວພວກເຮົາຮູ້ບໍ່ວ່າ ຄຸນຄ່າທາງດ້ານພູມປັນຍາບັນພະບູລຸດຂອງລາວເຮົາ ເພິ່ນໄດ້ຂີດຂຽນ ບັນດາສາດຕະສົນຄວາມຮູ້ໃນແງ່ມູມຕ່າງໆ ໄວ້ຢ່າງມາກມາຍກ່າຍກອງ, ບໍ່ວ່າຈະເປັນຫລັກທັມຄຳສັ່ງສອນລະດັບຕ່າງໆ ຂອງອົງພຣະສັມມາສັມພຸທເຈົ້າ ນິທານຊາດົກຕ່າງໆ ທີ່ແອບແຝງໄວ້ຊຶ່ງປັດຊະຍາຊີວິດທີ່ສູງສົ່ງທາງດ້ານຄຸນຄ່າ ຕຳລາຍາພື້ນເມືອງ ຕະຫລອດຮອດຮີດສິບສອງ ຄອງສິບສີ່ ວັດທະນະທັມປະເພນີອັນດີງາມຂອງຊາດລາວເຮົາໄວ້ ພວກເຮົາທັງຫລາຍຜູ້ເປັນລູກເປັນຫລານເກີດມາພາຍຊ້ອຍ ອາດຈະອົດກັ້ນໃນຄວາມດີອົກດີໃຈບໍ່ໜ້ອຍ ກ້າພວກເຮົາຫາກຮູ້ເຖິງຄຸນຄ່າພູມປັນຍາບັນພະບູລຸດຂອງເຮົາ ທີ່ໄດ້ຈົດກ່າຍກ່າຍທອດສິ່ງດັ່ງກ່າວນີ້ໄວ້ໃນໜັງສືໃບລານ ຝາກໃຫ້ແກ່ພວກເຮົາທັງຫລາຍ ໄດ້ຮູ້ໄດ້ເຫັນໄດ້ອ່ານ ແລະ ຮູ້ເລີກເຊິ່ງເຖິງຄຸນຄ່າ ແລະ ຄວາມໝາຍໃນບົດຕ່າງໆເຫລົ່ານັ້ນ ການຮູ້ອ່ານຮູ້ຂຽນໂຕທັມໃນປັດຈຸບັນ ແມ່ນກຳລັງຈະເລືອນລາງຈາງຫາຍໄປກັບເວລາ ໂດຍສະເພາະແມ່ນຊາວໜຸ່ມໄວຄະນອງ ແມ່ນແຕ່ໃນວົງການຂອງນັກບວດບັນພະຊິດຈຳນວນຫລວງຫລາຍ ກໍ່ບໍ່ສາມາດອ່ານໄດ້ຂຽນໂຕທັມໄດ້ ສະນັ້ນ, ເພື່ອເປັນການປົກປັກຮັກສາໄວ້ ຊຶ່ງມູນເຊື້ອອັນດີງາມຂອງພະສົງສາມເນນລາວເຮົານັ້ນ ທາງຄະນະສຶກສາສົງສູນກາງ ເພິ່ນຈຶ່ງໄດ້ວາງມາດຕະການລະບຽບການຈຳນວນນຶ່ງອອກມານຳໃຊ້ເປັນການປຸກລະດົມ ພຣະເນຣເນນນ້ອຍເຫັນໄດ້ຄຸນຄ່າຂອງໂຕໜັງສືທັມ ຄືນັກຮຽນພຣະສົງສາມເນນອົງໃດທີ່ຈະເຂົ້າສູ່ການຮຽນຊັ້ນ ມໍ 1 ຈະຕ້ອງມີການເສັງສູດ, ອ່ານໂຕໜັງສືທັມ( ເທສນາໂຕທັມ )ໄດ້ ຈຶ່ງມີສິດເຂົ້າຮຽນຕໍ່ ແລະ ຜູ້ທີ່ຮຽນຈົບຊັ້ນມໍປາຍສົງໄດ້ແລ້ວນັ້ນ ຈະເຂົ້າຮຽນຕໍ່ວິທະຍາໄລສົງລ້ວນແຕ່ໄດ້ຜ່ານການສອບເສັງສູດສອບເສັງເທດໂຕໜັງສືທັມເສຍກ່ອນແລະ ໃຫ້ໂອກາດແກ່ຜູ້ທີ່ມີຈິດໃຈຝັກໃຝ່ໃນການຮຽນຮູ້ອ່ານໄດ້ຂຽນເປັນໂຕໜັງສືທັມ ໂດຍສະເພາະໃນຫລັກສູດວິຊາພາສາບາລີ ວິຊາແຕ່ງ - ແປບາລີ ຂອງວິທະຍາໄລສົງ ອາຈານສອບຈະຂຽນເປັນໂຕໜັງສືທັມລ້ວນໆ ອັນນັ້ນຄືແນວໂນ້ມ

☛



ສາມະເນນກຳລັງລືບຄອງຈານໃບລານທີ່ຂຽນແລ້ວ.ເພື່ອໃຫ້ເຫັນໂຕໜັງສື

ທີ່ຈະເຮັດໃຫ້ໂຕໜັງສືທັມໄດ້ຫວນກັບຄືນມາມີຊີວິດອີກເທື່ອນຶ່ງໃນສັງຄົມພຸທສາສນາ ກໍ່ຄືອົງເຂດວຽກງານອື່ນໆຂອງຄົນລາວເຮົາ. ຈາກຄຸນຄ່າອັນມາກມາຍດັ່ງກ່າວມານັ້ນ, ທາງຜູ້ອໍານວຍການວິທະຍາໄລສົງ ຈິ່ງໄດ້ຈັດໃຫ້ມີການສິດສອນວິຊາໂຕໜັງສືທັມຂຶ້ນໃນສົກຮຽນ 2001-2002 ທີ່ຜ່ານມາ ເຫັນວ່າໄດ້ຮັບຄວາມສົນໃຈຫລາຍພໍສົມຄວນຈາກພຣະສົງສາມເນນ ມີນັກຮຽນທັງໝົດ 100 ກວ່າອົງໄດ້ເຂົ້າຮ່ວມກັບສຶກສາຢ່າງກວ້າງຂວາງໃນໂຄງການດັ່ງກ່າວນີ້ ນອກຈາກຈະສິດສອນໜັງສືທັມແລ້ວຍັງສອນວິຊາຄວາມຮູ້ທາງດ້ານສິນລະປະລາຍລາວການແຕ້ມຮູບພາບທັມມະຊາດຕ່າງໆອີກ. ຜ່ານການສິດສອນຄວາມຮູ້ຈາກຄູອາຈານເປັນເວລາສັ້ນໆພຽງແຕ່ 7 ເດືອນ ກໍ່ມີພຣະສົງສາມເນນຫລາຍອົງໄດ້ມີສີໄມ້ລາຍມືຂີດຂຽນໂຕໜັງສືທັມໃສ່ໃບລານທີ່ງົດງາມ ແຕ້ມຮູບລົງລາຍຕ່າງໆ ທີ່ອ່ອນຊ້ອຍເປັນທີ່ປະທັບໃຈແກ່ຜູ້ທີ່ໄດ້ມາເຫັນ ໂດຍສະເພາະໃນເວລາອອກສະແດງສາທິດ ເນື່ອງໃນກອງປະຊຸມວິຊາການປົກປັກຮັກສາໜັງສືຜູກໃບລານທີ່ແຂວງບໍລິຄໍາໄຊ ຄັ້ງວັນທີ່ 18-20 ມີນາ 2002 ຜົນງານທັງໝົດທີ່ກ່າວມານັ້ນເກີດຂຶ້ນໄດ້ກໍ່ຍ້ອນວ່າທາງວິທະຍາໄລສົງພາກບໍາລຸງແມ່ນໄດ້ຮັບທຶນອຸປະກໍາ ເພື່ອເປັນອັດຕາແກ່ພະນັກງານຄູອາຈານ ແລະ ອຸປະກອນຕ່າງໆທີ່ຮັບໃຊ້ວຽກງານສິດສອນຈາກໂຄງການປົກປັກຮັກສາໜັງສືຜູກໃບລານ (ການຮ່ວມມືລາວ - ເຢຍຣະມັນ). ນອກຈາກໂຄງການດັ່ງກ່າວມານີ້ແລ້ວ ອົງການພຸທສາສນາສໍາພັນລາວ ເພິ່ນກໍ່ໄດ້ມີແຜນການຮຽບຮຽງ ແລະ ຈັດພິມຕໍາລາຮຽນໂຕໜັງສືທັມເພື່ອເປັນຫລັກສູດ ຊັ້ນມັດທະຍົມ 1 - 2 - 3 - 4 - 5 - 6 ເປັນການປູພື້ນຖານຄວາມຮູ້ ທາງດ້ານໂຕໜັງສືທັມໃຫ້ແກ່ພຣະພິກຂຸສົງສາມເນນໄດ້ມີໂອກາດຮຽນຮູ້ໃຫ້ຫຼາຍໆຂຶ້ນ.

ສະນັ້ນ, ຈິ່ງພໍສັງລວມໄດ້ວ່າ ຢາກເຮັດໃຫ້ພູມປັນຍາອັນເລີດທາງດ້ານຄຸນຄ່າຄືດັ່ງກ່າວມານັ້ນ ເກີດຜົນປະໂຫຍດແກ່ສັງຄົມ ແລະ ສືບທອດໄປພາຍພາກໜ້າໄດ້ນັ້ນ ວຽກງານປົກປັກຮັກສາ, ສຶກສາຮຽນຮູ້ໃນໂຕໜັງສືທັມ ຈິ່ງເປັນວຽກງານຂອງໝົດທຸກຄົນໃນສັງຄົມ ບໍ່ແມ່ນແຕ່ສະເພາະພຣະສົງສາມເນນເປັນຜູ້ບວດຮຽນຂຽນອ່ານເທົ່ານັ້ນ ເມື່ອພວກເຮົາເຮັດໄດ້ຄືດັ່ງກ່າວມານີ້ ພູມປັນຍາຈິ່ງຈະຍືນຍົງຄົງຕົວໄປໄດ້ນານຕາມກາລະອັນຄວນ.



*ສາມເນນ ຈາກ ວິທະຍາໄລສົງອົງຕື້ ສາທິດການແຕ້ມລາຍລາວ ຢູ່ວັດ ສີມຸງຄຸນ ມ. ປາຊັນ ຂ. ບໍລິຄໍາໄຊ*

# ການບຳເພັນປາຣະມີ ຂອງພຣະເວດສັນດອນ

*ໂດຍ : ບຸນເລີດ ທຳມະຈັກ*

* ມຫາເວສສັນຕຣະຊາດົກ ມີໃນສຸດຕັນຕະປິດົກ ຊື່ຂຸທກະນິກາຍຊາດົກ ເປັນຄຳສອນທີ່ມີລັກສະນະເປັນນິທານສຸພາສິດ (ແຕ່ໃນສະບັບປາລີທີ່ເປັນປິດົກແທ້ບໍ່ມີ) ເລື່ອງປະກອບມີສຸພາສິດ ຫລື ຄຳສັນທີ່ແຕ່ງຕາມຫລັງເອີ້ນວ່າ "ຊາຕກັດຖະກະຖາ" ເຊິ່ງເກີດຈາກການໄປສຶກສາພຸທສາສນາໃນລັງກາທີ່ບຂອງພຣະເຖຣະຊາວອິນໂດຈີນ ເມື່ອ ພ.ສ. ລ່ວງໄດ້ 900 ກວ່າປີ.

ດັ່ງຕຳນານອັດຖະກະຖາຈານກ່າວໄວ້ໃນຈະຣິຍະປີດົກວ່າ :

1. ໃນກາລະເມື່ອເກີດໃໝ່ (ປະສູດ) ໄດ້ຕັດກັບມານດາວ່າ ຈະບຳເພັນທານ ແລະ ບໍລິຈາກ ມະຫາ ທານທັງປວງ ຈັດເປັນ **ທານະປາຣະມີ.**

2. ກາລະເມື່ອຊົງປະທັບຢູ່ໃນຄາຣະວາດ (ຢູ່ຄອງເຮືອນ) ຊົງຮັກສາສິນຫ້າເປັນນິດຈະການ (ປັນຈະສີນ) ແລະ ຮັກສາສິນອຸໂປສົດທຸກໆວັນເພັງກໍ່ເປັນ **ສີລະປາຣະມີ.**

3. ກາລະເມື່ອສະເດັດອອກຈາກນະຄອນ ສະລະເສຽຊຶ່ງກາມະຄຸນຊົງພະນວດເປັນດາບົດຢູ່ທີ່ ເຂົາວົງກົດຄີລີຈັດເປັນ **ເນກຂັມມະປາຣະມີ.**

4. ກາລະເມື່ອຊົງດຳລິຈະໃຫ້ອັດຊັດຕິກະທານຍາມ ຍັງຊົງພະເຍົາໄວ ແລະ ໃນກາລະເມື່ອພະຣາຊທານ 2 ກຸມມານແກ່ຊູຊົກພາມ ປະກອບດ້ວຍວິຈາຣະນະຍານບັນເທົາເສຽ ຊຶ່ງຄວາມຮັກ ແລະ ຄວາມໂສກ ຈັດເປັນ **ປັນຍາປາຣະມີ.**

5. ກາລະເມື່ອສະເຫວີຍຣາຊະສົມບັດ (ເປັນກະສັດ) ຊົງອຸດສາຫະສະເດັດອອກສູ່ໂຮງທານທົກ ແຫ່ງທຸກໆເຄິ່ງເດືອນບໍ່ໄດ້ຂາດ ແລະ ກາລະເມື່ອອອກຊົງບວດນອກສາສນາ ອຸດສາຫະບູຊາໄຟ ເພື່ອບັນລຸເຕໂຊກະສິນ ພາວະນາ ເປັນ **ວິຣິຍະປາຣະມີ.**

6. ເມື່ອພະຣາຊະບິດາຕັດສັ່ງໃຫ້ເນຣະເທດອອກຈາກພະນະຄອນ ຕາມຄຳສະເໜີຂອງຊາວ ສີພີຣາດ ບໍ່ໄດ້ມີຄວາມໂກດແຄ້ນໃນພຣະຣາຊບິດາ ແລະ ເມື່ອເຫັນຊູຊົກພາມຕີຣາຊກຸມມານທັງສອງຕໍ່ໜ້າ ກໍອົດກັ້ນເຊິ່ງຄວາມໂກດໃນພຣາມເປັນ **ຂັນຕິປາຣະມີ.**

7. ກາລະເມື່ອຕັດປະຕິຍານຈະໃຫ້ອັດກິທານ ແລະ ບຸດຕາທານແກ່ພາມ ກໍຊົງເສຽສະລະບໍລິຈາກໃຫ້ໂດຍສັດຈິງ ບໍ່ຕັດກັບກອກຫລອກລວງ ຈັດເປັນ **ສັດຈະປາຣະມີ.**

8. ກາລະເມື່ອຊົງສມາທານທ່ຽງໝັ້ນ ບໍ່ມີຄວາມສະເໜ່ຫາອາໄລ ໃນບຸດຕະທານສະລະ ໃຫ້ເປັນທານ ແລະ ເມື່ອເຫັນໝູ່ພົນເສນາ ກໍ່ມີຫົວໃຈບໍ່ຫວັ່ນໄຫວຕໍ່ໄພ ຈັດເປັນ **ອະທິດຖານປາຣະມີ.**

9. ໃນກາລະເມື່ອແຜ່ເມດຕາໄປແກ່ຊາວກະລິງຄະຣາດ ພຣະຣາຊທານຊ້າງແກ້ວອາດ ປັຈຈັຍນາເຄນ ແລະ ເມື່ອດຳລົງຢູ່ເຂົາວົງກົດກໍແຜ່ເມດຕາໄປແກ່ສັພສັດ ຈັດເປັນ **ເມດຕາປາຣະມີ.**

10. ກາລະເມື່ອຕັດເສຽເຊິ່ງຄວາມສະເໜ່ຫາໃນປີຍະບຸດ ບໍ່ໄດ້ສະແດງຄວາມຂຶ້ງຄຽດແກ່ພາມ ຕັ້ງໃຈໃຫ້ເກີດມັດຊັດຕະອາຣົມ (ເປັນກາງ) ຄືບໍ່ຮັກບໍ່ຊັງໃຜ ຈັດເປັນ **ອຸບເປກຂາປາຣະມີ.** (ລວມແລ້ວ) ສົມບູນໃນທັສປາຣະມີຍານທັງ 10 ປະການ.

- ລາຍຊື່ກັບເທດໃນປະເພນີຕັ້ງບຸນພະເວດມີ :

(1) ທັສພອນ 19 ຄາຖາ : ພອນທີບ 10 ປະການທີ່ພະອິນປະທານໃຫ້ແກ່ ບາງຜຸສະດີ

➡

(2) ຫິມະພານ 134 ຄາຖາ : ພັນລະນາປ່າຫິມະພານ (ປ່ານ້ຳຫມອກ) ທີ່ພະເວດໄປຊີງຜນວດຢູ່

(3) ທານະຂັນ 209 ຄາຖາ : ທານທີ່ພະເວດບໍລິຈາກກ່ອນກິກເນຣະເທດຈາກເມືອງ ປະເຊໄຊ

(4) ວັນນະປະເວສ 57 ຄາຖາ : ພັນນາການເດີນທາງສູ່ເຂົາວົງກົດທີ່ພະເວດໄປບວດເປັນລືສີ

(5) ຊູຊະກະ (ໂຊບຊົກ) 79 ຄາຖາ : ຈາເກີງຊູຊະກະພາມຕາມໄປຂໍພຣະຊາລີ, ກັນຫາຈາກ ພະເວດ

(6) ຈຸລພົນ 35 ຄາຖາ : ກ່າວເກີງປ່າ ແລະ ຝູງສັດ ໃນດົງນ້ອຍ (ປ່ານ້ອຍຕ່າງໆ)

(7) ມຫາພົນ 80 ຄາຖາ : ກ່າວເກີງປ່າໄມ້ ແລະ ຝູງສັດທີ່ມີໃນປ່າໃຫຍ່ດົງຫນາທຸກຊະນິດ

(8) ກຸມມານ 101 ຄາຖາ : ຈາເກີງການບໍລິຈາກກຸມມານທັງ 2 ເປັນທານແກ່ຊູຊະກະພາມ

(9) ມັດທີ 90 ຄາຖາ : ກ່າວເກີງການໄປປ່າຫາລູກໄມ້ຍັງບໍ່ກັບເຫັນລູກກ່ອນທີຊູຊະກະຈະພາສອງກຸມມານໄປ.

(10) ສັກກະບັບ 43 ຄາຖາ : ພຣະອິນແປງກາຍເປັນພາມມາຂໍພຣະນາງມັດທີຈາກ ພະເວດ

(11) ມຫາຣາດ 69 ຄາຖາ : ພຍາບຸຣົມສົນໄຊໄດ້ໄຖ່ເອົາກຸມມານທັງ 2 ຈາກຊູຊົກພາມ

(12) ສະກະສັດ (ສັກກະຕິ) 36 ຄາຖາ : ພຣະຣາຊກຸມມານກັບທາຊາລີໄດ້ພົບພະໄອຍະກາ ( ປູ່ - ຍ່າ ) ພໍ່ແມ່ລວມກັນເປັນ 6 ກະສັດ

(13) ນະຄອນກັນ 48 ຄາຖາ : ຂະບວນການເຊີນພະເວດກັບເມືອງ ຫລັງຈາກບຳເພັນຢູ່ 7 ເດືອນຈຶ່ງໄດ້ກັບຄືນມາສະເຫວີຍຣາດຄັ້ງທີສອງ.

## ສຸພາສິດບູຮານ ຫມວດຄຳ ໂຕງໂຕຍພາສິດ

*( ບາງຕອນຄັດຈາກປຶ້ມ ສຸພາສິດບູຮານ ຂອງ ມະຫາສິລາ ວິຣະວົງສ໌ )*

143. ໃຫ້ຕື່ນເດິກຄືກາ ໃຫ້ຫາກິນຄືໄກ່

155. ກາງຄືນເປັນເຫງັນ ກາງເວັນເປັນນົກເຄົ້າ ມື້ເຊົ້າເປັນແມວໂພງ

156. ຊິກິ່ມນ້ຳລາຍໃຫ້ຫລຽວເບິ່ງປ່ອງ ຊິເຕັ້ນຂ້າມຮ່ອງໃຫ້ຫລຽວເບິ່ງໜາມ ຊິກຸາມໃຫ້ຫລຽວເບິ່ງຫນ້າ ຜ້າເອົ້າຢ່າຟັນແຮງ ຂອງເພິ່ນແພງຢ່າເອົ້າໃກ້ ໄດ້ໂຊກແລ້ວຢ່າເມົາມົວ

161. ຍາມຍາກຄຶດເກີງນາຍ ຍາມຕາຍຄຶດເກີງພະ

171. ແກ້ວບໍ່ຜັດ ສາມປີເປັນແຮ່ ພີ່ນ້ອງບໍ່ແວ່ ສາມປີເປັນເພິ່ນ

235. ກົຽວຫຍ້ານຸງທົ່ງ ຕຳແຈ່ວໂຮຍແມ່ນ້ຳ

237. ເອົ້າເຕັມເລົ້າບັ່ງເວົ້າກໍຄື ເງິນເຕັມຖົງເວົ້າໂກງກໍໄດ້

249. ໃຈຫນັກໄດ້ກິນເອົ້າ ໃຈເບົາໄດ້ກິນກອຍຫົວໃຫຍ່

251. ເຈົ້ານາຍບໍ່ດີ ເຫັນແກ່ເງິນແສນໄທ່ ເຈົ້ານາຍດີເຫັນແກ່ໄພ່ແສນເມືອງ

### ຮັກ 3 ປະການ

304. ເປັນນາຍໃຫ້ຮັກຫມູ່ ເປັນປູ່ໃຫ້ຫລານ ເປັນຂຸນກວານ ໃຫ້ຮັກລູກບ້ານ ຄັນຊິຕ້ານໃຫ້ຄ່ອຍພຽນຈາ ຢາກກິນນາໃຫ້ພຽນຂອງຝາກ.

# ພູມໃຈທີ່ໄດ້ມາເຫັນ

ໂດຍ: ບົວລີວັນ

**ວັນ** ທີ 8-9 ສິງຫາ 2001 ໜ່ວຍສຳຫລວດໄດ້ລົງເຄື່ອນໄຫວຢູ່ບ້ານນາທ້າງ ເມືອງຫີນບູນ ແຂວງ ຄຳມ່ວນ ກືວ່າ ເປັນບ້ານໜຶ່ງທີ່ຢູ່ຫ່າງໄກຈາກຕົວເມືອງ ບໍ່ມີທາງລົດໃຫຍ່ໄປຮອດ ມີແຕ່ທາງຍ່າງ ສ່ວນໄຟຟ້ານັ້ນບໍ່ຕ້ອງເວົ້າເຖິງ. ກ້າເອົາ ລົດໃຫຍ່ໄປຕ້ອງໄດ້ຂັບໄປຕາມທາງລົນຍ່າງ. ກ່ອນຈະໄປຮອດບ້ານ ໄດ້ພົບກັບຄວາມຫຍຸ້ງຍາກໃນການເດີນທາງພໍສົມຄວນ ເພາະມີພຽງທາງລົດໄກເທົ່ານັ້ນ.



ໃບລານຢູ່ວັດ ນາທ້າງ



ສິວທັດ ວັດນາທ້າງ

ແຕ່ເມື່ອຄະນະສຳຫລວດໄປຮອດບ້ານແລ້ວກໍ່ໄດ້ຕິດຕໍ່ພົວພັນກັບອຳນາດການປົກຄອງບ້ານ ເພື່ອຈະໄດ້ໂອ້ລົມກັນ ແລະ ແຈ້ງຈຸດປະສົງໃນການລົງສຳຫລວດກວດກາໃບລານ ພາຍໃນວັດ. ຊາວບ້ານ ແລະ ອຳນາດການປົກຄອງກໍ່ໄດ້ໃຫ້ຄວາມຮ່ວມມືກັບຄະນະສຳຫລວດເປັນຢ່າງດີ, ເມື່ອຄະນະສຳຫລວດໄດ້ສຳເລັດການກວດກາໜັງສືໃບລານ ກໍ່ພົບໜັງສືຈຳນວນ 309 ຜູກ ຈຸດພິເສດຂອງວັດນີ້ຄື : ມີຍາພໍ່ທີ່ສາມາດຂຽນໜັງສືໂຕທັມໄດ້, ຊຶ່ງເຫັນວ່າຫາຍາກໃນປັດຈຸບັນ ແຕ່ວ່າເພິ່ນມີອາຍຸແກ່ແລ້ວ ບໍ່ສາມາດຂຽນໄດ້ຫລາຍ. ເຖິງແມ່ນວ່າຈະຢູ່ຫ່າງໄກຈາກຕົວເມືອງ ແຕ່ກໍ່ຍັງມີມໍລະດົກທາງດ້ານວັດທະນະທັມໄວ້ ເພື່ອໃຫ້ ປະຊາຊົນພາຍໃນບ້ານກໍ່ຄືປະຊາຊົນລາວທົ່ວປະເທດໄດ້ສຶກສາຄົ້ນຄວ້າຕໍ່ໄປ. ສ່ວນສະພາບການເກັບມ້ຽນມັດຫນັງສືຍັງບໍ່ດີປານໃດເພາະວ່າຍັງມີຫນັງສືຈຳ ນວນນຶ່ງ ທີ່ບໍ່ສາມາດນຳອອກມາໃຊ້ໄດ້ຍ້ອນກຸ້ກຝຸ່ນຮົ່ວໃສ່.

ດັ່ງນັ້ນ, ການສຳຫລວດຫນັງສືໃບລານຄັ້ງນີ້ເຖິງວ່າຈະມີການເດີນທາງຫຍຸ້ງຍາກລຳບາກປານໃດກໍ່ຕາມ ແຕ່ຄະນະສຳຫລວດຍັງພູມໃຈທີ່ໄດ້ເຫັນບ້ານດັ່ງກ່າວຍັງມີມໍລະດົກທາງດ້ານພູມປັນຍາທ້ອງຖິ່ນ ແລະ ນັກປາດອາຈານກືວ່າເປັນຜູ້ນຳທາງດ້ານວັດທະນະທັມເພື່ອໃຫ້ອະນຸຊົນຮຸ່ນຫລັງໄດ້ສືບທອດຕໍ່ໄປ.

## ສຸພາສິດບູຮານ ຫມວດຄຳ ປັນຫາພາສິດ

*( ບາງຕອນຄັດຈາກປຶ້ມ ສຸພາສິດບູຮານ ຂອງ ມະຫາສີລາ ວີຣະວົງສ໌ )*

19. ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ — ປາໃນໜອງເອົາກິນໃຫ້ໄດ້
20. ໂຈດບໍ່ໃຫ້ກາມ — ຈຳເລີຍບໍ່ໃຫ້ແກ້
    ໃຫ້ໄດ້ຂອງເກົ່າຄືນມາ
21. ຢາກກິນເຂົ້າ — ໃຫ້ປູກໃສ່ພະລານຫີນ
    ຢາກມີສິນ — ໃຫ້ອ້າພໍ່ຕີແມ່
    ຢາກມີຄົນມາແວ່ — ໃຫ້ອ້າຫມູ່ດຽວກັນ
    ຢາກມີສີສັນ — ໃຫ້ນອນດິນເກືອກຂີ້ຝຸ່ນ
    ຢາກມີຄວາມອຸ່ນ — ໃຫ້ອາບນ້ຳຍາມຫນາວ
    ຢາກກິນປາຂາວ — ໃຫ້ແບກແຫຂຶ້ນໂຄກ
    ຢາກຕົກນາຮົກ — ໃຫ້ເຂົ້າວັດຟັງທັມ

## ສຸພາສິດບູຮານ ໝວດຄຳ ປັນຫາພາສິດ

*( ບາງຕອນຄັດຈາກປຶ້ມ ສຸພາສິດບູຮານ ຂອງ ມະຫາສີລາ ວີຣະວົງສ໌ )*

| | |
|---|---|
| 1. ກາກິນປີງ ໄປຄາຄໍແຮ້ງ | ເຮືອຄາແກ້ງໄປຫລົ້ມເຄິ່ງວັງ |
| 2. ກຳສັງໂອ້ ໂອທອງສັງມາແຕກ | ບາດກະໂປະພາກຜ້າວສັງມາພົ້ນກວ່າໂອ |
| 3. ກວາງກິນໝາກຂາມປ້ອມ ໄປຄາກົ້ນຂີ້ມົ່ງ | ບາດວ່າມົ່ງບໍ່ຂີ້ ສາມມື້ກະຕ່າຍຕາຍ |
| 4. ເກົ້າຊີອ້າ ສິບຊີອ້າ ໃຫ້ເອົາແກ່ນກະຍຸງຕີ | ຢ່າໄດ້ເອົາບາລີ ຕ່ອຍຕີຕາງຄ້ອນ |
| 5. ຢາກກິນເຫັດໃຫ້ເຈົ້າແຍງລົງຫ້ວຍ | ຢາກກິນຜັກພິພວຍໃຫ້ເຈົ້າແຍງລົງບຸ່ງ |
| ຄັນວ່າຢາກໄດ້ກຸ້ງ | ໃຫ້ພາຍຄ້ອງຂຶ້ນງ່າຍາງ |
| 6. ຫີນແຜ່ນລ້ານກ້ອນໃຫຍ່ຄືຊິຫນັກ | ບາດທ່າເອົາສະໂນຕິດຊັ່ງຊາສັງມາໄດ້ |
| ຜີວ່າຕາມຕາຄື້ວ ຄືສະໂນຊິຫນັກກວ່າ | ຄັນວ່າຕາບໍ່ຄື້ວ ຊິເບົາເບື້ອງຝ່າຍສະໂນ |
| 11. ບ້ານເມືອງຂ້ອນ | ຂຸນກວານຍາດໄພ່ |
| ເມືອງຂວາໄດ້ໄກ່ໂຈ້ນ | ເມືອງຊ້າຍໄດ້ໄກ່ຍອງ |
| ເມືອງຊອງໄດ້ໄກ່ແຈ້ | ຄືຊິແພ້ໄພ່ເມືອງ |
| 12. ບໍ່ຢາກພົ້ຫລົງຊາດມາພົບ | ຫົວກົບເກີດເປັນທອງແດງ |
| ຫົວປາກະແຍງເກີດເປັນທອງຄຳ | ຊ່າງໃດຊິຕີໄດ້ |
| 16. ເປັດເປັນຜູ້ໄຂ່ | ໄກ່ເປັນຜູ້ຟັກ |
| ຂີ້ກະດັກກະເດືອນເປັນຜູ້ລ້ຽງ | ບຸນຊິໄດ້ແກ່ໃຜ |


**ເຈົ້າຂອງ**

*ໂຄງການປົກປັກຮັກສາໜັງສືໃບລານລາວ*
*(ການຮ່ວມມືລາວ-ເຢຍຣະມັນ)*

**ສຳນັກງານຕັ້ງຢູ່**

*ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ*
*ຫໍສະໝຸດແຫ່ງຊາດ*
*ຖະນົນເຊດຖາທິຣາດ (ນ້ຳພຸ)*

ຕູ້ປ.ນ. 8818
ໂທ: (856-21) 251 405
ແຟັກ: (856-21) 213 029
E-mail : bailane@laotel.com

**ຄະນະຈັດທຳ**

| | |
|---|---|
| ທີ່ປຶກສາ | : ດາລາ ກັນລະຍາ |
| | : ບຸນຍົກ ແສນສູນທອນ |
| ຫົວໜ້າ ບ.ກ | : ກົງເດືອນ ເນດຕະວົງ |
| ຮອງຫົວໜ້າ ບ.ກ | : ບຸນເລີດ ທຳມະຈັກ |
| ກ່າຍພາບ | : ຄຳແສງດາວ ປະກົມມະວົງ |
| ຈັດໜ້າ ຄອມພິວເຕີ | : ສີສຸຟັນ ດວງມະນີ |
| ຕີພິມ ຄອມພິວເຕີ | : ບົວສີ ສີປະເສີດ |
| ນັກຂ່າວ ( ກ່າຍຮູບ ) | : ຄຳສິງ ວົງສະຫວ່າງ |
| | : ໄພວົງ ທົງສັກສິດ |
| | : ຄຳມຸກ ສີລີອາໄພ |